# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ເມສາ 2025
ປີທີ 14
ສະບັບທີ 1013
ລາຍສັບປະດາ


## ສະພາແຫ່ງຊາດ ໄວ້ອາໄລເຖິງດວງວິນຍານສະຫາຍ ພົນເອກ ຄຳໄຕ ສີພັນດອນ



(ສພຊ) - ເພື່ອເປັນການສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງ ແລະ ຄວາມອາໄລຮັກຢ່າງສຸດຊຶ້ງ, ໃນຕອນບ່າຍວັນທີ 3 ເມສານີ້ ທີ່ຫໍປະຊຸມແຫ່ງຊາດ, ການນຳຂັ້ນສູງຂອງສະພາແຫ່ງຊາດ ນຳໂດຍສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະ

ອ່ານຕໍ່ໜ້າ 10




ປະເທດເຮົາ ມີດິນດອນຫຼວງຫຼາຍ, ແຕ່ແຮງງານຊໍ້າພັດໜ້ອຍ, ຊາວໄຮ່ນາກວມສ່ວນຫຼາຍຂອງປະຊາກອນ, ຖ້າຫາກວ່າບໍ່ມີນະໂຍບາຍທີ່ດີນອັນສອດຄ່ອງແລ້ວ ກໍຈະບໍ່ສາມາດເສີມຂະຫຍາຍກຳລັງແຮງ ແລະ ສະຕິປັນຍາຂອງຊາວໄຮ່ນາ ກໍຄືຄວາມອາດສາມາດບົ່ມຊ້ອນອັນໃຫຍ່ຫຼວງຂອງການກະສິກຳ-ປ່າໄມ້ຂອງປະເທດເຮົາ.

(ນິພົນເລືອກເຟັ້ນ ເຫຼັ້ມ III, ໜ້າ 30 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມີນາ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມີນາ2025 ໄດ້ດຳເນີນໃນວັນທີ 31 ມີນາ-1 ເມສານີ້ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳແລະກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນ: ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 30/ລບ, ລົງວັນທີ 6 ມີນາ 2025 ກ່ຽວກັບການສະເໜີເພີ່ມແຮ່ຫາຍາກ

ອ່ານຕໍ່ໜ້າ 9




## ມອບ-ຮັບເຄື່ອງຊ່ວຍເຫຼືອຜູ້ທຸກຍາກຢູ່ເຂດຫ່າງໄກສອກຫຼີກ



(ສພຊ) - ວັນທີ 31 ມີນານີ້ ທີ່ສະພາແຫ່ງຊາດ, ໄດ້ມີພິທີມອບ-ຮັບຜ້າຫົ່ມ ຈຳນວນ 100 ຜືນ ແລະ ເງິນສົດ ລວມມູນຄ່າ 35 ລ້ານກີບ ຈາກບໍລິສັດ ພີທີແອວ ໂຮນດິງ ຈຳກັດ ເພື່ອນຳໄປມອບໃຫ້ແກ່ປະຊາຊົນຜູ້ທຸກຍາກຢູ່ເຂດຫ່າງໄກສອກຫຼີກ; ໂດຍການກ່າວມອບຂອງຮອງຜູ້ອຳນວຍການບໍລິສັດດັ່ງກ່າວ,ຕາງໜ້າກ່າວຮັບໂດຍທ່ານ

ອ່ານຕໍ່ໜ້າ 9

## ຮຽບຮຽງເນື້ອໃນກົດໝາຍການປົກຄອງທ້ອງຖິ່ນ



ອ່ານຕໍ່ໜ້າ 10

## ສະຫາຍ ສົມມາດ ພົລເສນາ ຕ້ອນຮັບ ຮອງປະທານສະພາປະຊາຊົນນະຄອນຊຽງໄຮ້



ອ່ານຕໍ່ໜ້າ 12

## ລັດຖະທຳມະນູນ ສະບັບປີ 2025

ພາຍຫຼັງກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນການປັບປຸງລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງປີ 2025 ໃນວາລະຂອງກອງປະຊຸມ ຄັ້ງວັນທີ 17 ມີນາ 2025 ແລະ ໄດ້ຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 20 ມີນາ 2025; ປະທານປະເທດ ໄດ້ອອກລັດຖະດຳລັດ ສະບັບເລກທີ 037/ປປທ, ລົງວັນທີ 22 ມີນາ 2025 ປະກາດໃຊ້ລັດຖະທຳມະນູນສະບັບປີ 2025 ຢ່າງເປັນທາງການ. ໜັງສືພິມຜູ້ແທນປະຊາຊົນ ມີຄວາມຍິນດີສະເໜີເນື້ອໃນຄົບຖ້ວນລັດຖະທຳມະນູນສະບັບປີ 2025 ດັ່ງນີ້:

ອ່ານຕໍ່ໜ້າ 3


ຜີບ້ານ ພ້ອມຜີປ່າ (ໜ້າ 9)

ປີໃໝ່ ໄຊຊະນະໃໝ່ (ໜ້າ 10)



ສິງກະໂປເປີດໃຫ້ປະຊາຊົນ... (ໜ້າ 11)

ເຝົ້າໄວ້ ໄດ້ຍິດຮຽນ
ວິເສດ ສະແຫວງສຶກສາ
ເລື່ອງທີ່ໜ້າສົນໃຈ... (ໜ້າ 12)


**ຊົມເຊີຍວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 70 ປີ (14/4/1955-14/4/2025) ຢ່າງສຸດໃຈ!**

# ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດ ການຢ້ຽມຢາມສະຫະລາຊະອານາຈັກອັງກິດ



(ສພຊ)-ຕອບສະໜອງຕາມການເຊື້ອເຊີນຂອງກະຊວງການຕ່າງປະເທດສະຫະລາຊະອານາຈັກອັງກິດ, ຄະນະຜູ້ແທນຄະນະມິດຕະພາບລັດຖະສະພາລາວ-ສະຫະລາຊະອານາຈັກອັງກິດນຳໂດຍທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ໄປຢ້ຽມຢາມ, ເຮັດວຽກແລະແລກປ່ຽນບົດຮຽນ ຢູ່ສະຫະລາຊະອານາຈັກອັງກິດ ໃນລະຫວ່າງວັນທີ24-27 ມີນາ2025ເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງໆ ຂຶ້ນ ເວົ້າລວມ, ເວົ້າສະເພາະແມ່ນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດລາວ-ສະຫະລາຊະອານາຈັກອັງກິດ ທັງເປັນການສະເຫຼີມສະຫຼອງຄົບຮອບ 70 ປີ ແຫ່ງສາຍພົວພັນການທູດລະຫວ່າງສອງປະເທດ.

ຈຸດປະສົງຂອງການຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ແມ່ນເນັ້ນໃສ່ການແລກປ່ຽນບົດຮຽນໃນວຽກງານຂອງ 3 ອົງການ ເຊັ່ນ: ສະພາສູງ (House of Lords), ສະພາຕ່ຳ (House of Commons) ແລະ ກະຊວງການຕ່າງປະເທດ (Foreign, Commonwealth & Development Office). ຄະນະຜູ້ແທນສະພາແຫ່ງຊາດສປປລາວ ໄດ້ພົບປະທ່ານ ນາງ Catherine West ສະມາຊິກສະພາຕ່ຳ, ຮອງລັດຖະມົນຕີກະຊວງການຕ່າງປະເທດ, ຜູ້ຮັບຜິດຊອບວຽກງານຂົງເຂດອິນໂດ-ປາຊີຟິກ, ທ່ານ Lord Gardiner of Kimble ຮອງປະທານສະພາສູງ, ອະດີດລັດຖະມົນຕີກະຊວງກະສິກຳ, ທ່ານ ນາງ Baroness Barker ຮອງປະທານອາວຸໂສສະພາສູງ; ເຂົ້າຮ່ວມສັງເກດການກອງປະຊຸມພາກຊັກຖາມນາຍົກລັດຖະມົນຕີອັງກິດຂອງສະພາຕ່ຳ, ສືບຕໍ່ພົບປະຄະນະກຳມະການຮ່າງກົດໝາຍກ່ຽວກັບການເຈັບເປັນຂອງຜູ້ໃຫຍ່, ພົບປະຜູ້ຮັບຜິດຊອບວຽກງານສຳຫຼວດກໍລະນີສຶກສາກ່ອນນິຕິກຳກັບສະມາຊິກກຳມາທິການກົດໝາຍ, ພົບປະຜູ້ຮັບຜິດຊອບດ້ານງົບປະມານ ແລະ ການເງິນ ທີ່ເປັນອະດີດສະມາຊິກກຳມາທິການງົບປະມານ ແລະ ການເງິນ.

ນອກນັ້ນ, ຍັງໄດ້ເຂົ້າຮ່ວມສັງເກດການກອງປະຊຸມຄະນະກຳມະການປ້ອງກັນປະເທດ ແລະ ພົວພັນສາກົນ, ເຂົ້າສັງເກດການກຳມາທິການຮ່ວມວ່າດ້ວຍຫຼັກຖານສິດທິມະນຸດ (ສຶກສາກ່ຽວກັບການກົດຂີ່ຂ້າມຊາດທີ່ສົ່ງຜົນກະທົບຕໍ່ສິດທິມະນຸດຂອງປະຊາຊົນທີ່ດຳລົງຊີວິດຢູ່ໃນສະຫະລາຊະອານາຈັກອັງກິດ, ລວມທັງການກວດສອບປະສິດທິພາບຂອງການຈັດຕັ້ງປະຕິບັດກົດໝາຍ ແລະ ນະໂຍບາຍຂອງສະຫະລາຊະອານາຈັກອັງກິດໃນປັດຈຸບັນ ກ່ຽວກັບການປາບປາມຂ້າມຊາດ ແລະ ການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍ) ເຊິ່ງຄະນະຜູ້ແທນສະພາແຫ່ງຊາດລາວໄດ້ເອົາໃຈໃສ່ປຶກສາຫາລື ແລະ ແລກປ່ຽນສົນທະນາ ທີ່ເປັນການເນັ້ນໜັກເຖິງການເຮັດໜ້າທີ່ຂອງລັດຖະສະພາໃນການຊຸກຍູ້ການຮ່ວມມືກັນເພື່ອແກ້ໄຂບັນຫາທ້າທາຍຕ່າງໆ ທີ່ພວມເກີດຂຶ້ນໃນພາກພື້ນ ແລະ ສົ່ງເສີມການຮ່ວມມືເພື່ອການພັດທະນາໃນອະນາຄົດ.

ທ່ານ ປອ. ລີເບີ ລີບົວປາວ ໄດ້ກ່າວໃນກອງປະຊຸມພົບປະ ໂດຍຍົກໃຫ້ເຫັນເຖິງສະພາບການຂອງປະເທດລາວກໍຄືຂອງພາກພື້ນແລະຂອງໂລກທີ່ພວມຜັນແປໄປຢ່າງສະຫຼັບຊັບຊ້ອນ ແລະມີຄວາມທ້າທາຍຫຼາຍຢ່າງ ອັນເນື່ອງມາຈາກບັນຫາທາງດ້ານເສດຖະກິດ-ການເງິນ, ໄພພິບັດທາງທຳມະຊາດ, ການຄ້າທີ່ສົ່ງຜົນກະທົບຕໍ່ສະພາບເສດຖະກິດ, ການຮ່ວມມືຂອງບັນດາປະເທດທີ່ພວມມາລົງທຶນໃນ ສປປລາວ ເພື່ອການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ທ່ານໄດ້ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ເປັນການເພີ່ມທະວີການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ລາວ-ອັງກິດ ແລະ ລັດຖະບານອັງກິດ ໂດຍສະເພາະກະຊວງການຕ່າງປະເທດ ແລະ ຕີລາຄາສູງຕໍ່ການເຊື້ອເຊີນຄະນະມິດຕະພາບລັດຖະສະພາລາວ-ອັງກິດ ໃນຄັ້ງນີ້.

# ສະຫຼຸບການສ້າງນິຕິກຳຂອງ ຄປຈສພຊ



(ສພຊ) - ວັນທີ 31 ມີນານີ້ ທີ່ນະຄອນຫຼວງວຽງຈັນ ໄດ້ມີກອງປະຊຸມສະຫຼຸບຜົນສຳເລັດການສ້າງນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ແລະ ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ມີທ່ານຮອງປະທານກຳມາທິການກົດໝາຍ, ບັນດາທ່ານເລຂາທິການ ແລະ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ທົ່ວປະເທດ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈາກ ສພຊ, ສພຂ ແລະແຂກທີ່ຖືກເຊີນເຂົ້າຮ່ວມຫຼາຍກວ່າ 50 ທ່ານ.

ກອງປະຊຸມຄັ້ງນີ້ ເປັນການຫຼຸບຜົນການຄົ້ນຄວ້າສ້າງນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ເຜີຍແຜ່ຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ເພື່ອເຮັດໃຫ້ລັດຖະກອນຂອງສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮູ້, ເຊື່ອມຊຶມ ແລະ ເຂົ້າໃຈກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໃນການເປັນເສນາທິການທາງດ້ານວຽກງານດັ່ງກ່າວ ຢ່າງມີປະສິດທິພາບ ແລະເປັນເອກະພາບ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງ.

ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ແມ່ນວຽກງານໜຶ່ງທີ່ສຳຄັນເຊິ່ງໄລຍະຜ່ານມາ ໄດ້ຈັດກອງປະຊຸມຄົ້ນຄວ້າສ້າງນິຕິກຳຂອງສະພາແຫ່ງຊາດ ແລະ ຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ແລະ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃນຂອບເຂດທົ່ວປະເທດ; ນອກຈາກນັ້ນ, ຍັງໄດ້ຈັດກອງປະຊຸມທົດລອງນຳໃຊ້ຄູ່ມືດັ່ງກ່າວຢູ່ແຂວງຄຳມ່ວນ, ແຂວງວຽງຈັນ ແລະແຂວງເຊກອງ.

ໃນກອງປະຊຸມ ໄດ້ຮັບຟັງການສະຫຼຸບ, ຖອດຖອນບົດຮຽນການສ້າງນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ; ເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການຕິດຕາມກວດການການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ; ບົດສະເໜີການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ ແລະ ເຜີຍແຜ່ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງສ້າງສັນ ແລະ ກົງໄປກົງມາ.

**(ສອນສັກ ວັນວິໄຊ)**

# ສຳມະນາລະດັບພາກພື້ນ ການປ່ຽນແປງ ທາງດ້ານປະຊາກອນ ແລະ ພະຍາດທີ່ບໍ່ຕິດຕໍ່



(ສພຊ) - ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສຈ. ປອ. ດຣ. ມາຍຟອງ ມາຍຊາຍ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ອະທິການບໍດີມະຫາວິທະຍາໄລວິທະຍາສາດສຸຂະພາບ ພ້ອມດ້ວຍວິຊາການ 1 ທ່ານ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາລະດັບພາກພື້ນກ່ຽວກັບ "ການປ່ຽນແປງທາງດ້ານປະຊາກອນ ແລະ ພະຍາດທີ່ບໍ່ຕິດຕໍ່: ການແກ້ໄຂສິ່ງທ້າທາຍສຳລັບປະຊາກອນແລະໄວໜຸ່ມ" ທີ່ສະພາແຫ່ງຊາດແຫ່ງລາຊະອານາຈັກກຳປູເຈຍ ໄດ້ຈັດຂຶ້ນໃນວັນທີ 31 ມີນາ 2025 ທີ່ນະຄອນຫຼວງພະນົມເປັນເຊິ່ງມີຕົວແທນຈາກບັນດາປະເທດສະມາຊິກລັດຖະສະພາໃນພາກພື້ນອາຊຽນ ເຂົ້າຮ່ວມ.

ກອງປະຊຸມສຳມະນາຄັ້ງນີ້ ຈັດຂຶ້ນພາຍໃຕ້ການຮ່ວມມືຂອງສະພາແຫ່ງຊາດກຳປູເຈຍ, ສູນລັດຖະສະພາອາຊີ (PCAsia) ແລະ ເວທີປຶກສາຫາລືຂອງສະມາຊິກລັດຖະສະພາອາຊີ ກ່ຽວກັບປະຊາກອນ ແລະ ການພັດທະນາ (AFPPD) ເຊິ່ງໄດ້ແລກປ່ຽນປະສົບການ ແລະ ການຈັດຕັ້ງປະຕິບັດທີ່ດີ ໃນການແກ້ໄຂບັນຫາພະຍາດທີ່ບໍ່ຕິດຕໍ່ທັງເປັນການປຶກສາຫາລືກ່ຽວກັບການວາງນະໂຍບາຍເພື່ອຮັບມືກັບບັນຫາດັ່ງກ່າວ. ໃນລະຫວ່າງການແລກປ່ຽນຄຳຄິດເຫັນ ແລະບົດຮຽນ, ທ່ານ ສຈ. ປອ. ດຣ. ມາຍຟອງ ມາຍຊາຍ ໄດ້ນຳສະເໜີປະສົບປະການຂອງສະພາແຫ່ງຊາດລາວໃນເລື່ອງດັ່ງກ່າວ ພ້ອມທັງມີຄຳເຫັນແລກປ່ຽນ ແລະຕອບຄຳຊັກຖາມຈາກສະມາຊິກລັດຖະສະພາອາຊີ ໂດຍສະເພາະແມ່ນບັນຫາພະຍາດທີ່ບໍ່ຕິດຕໍ່ຢູ່ ສປປ ລາວ ໃນລັກສະນະສ້າງສັນ ແລະ ກົງໄປກົງມາ.

ກອງປະຊຸມຄັ້ງນີ້ ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ເຊິ່ງໄດ້ເຮັດໃຫ້ຄະນະຜູ້ແທນສະມາຊິກລັດຖະສະພາພາກພື້ນອາຊີ ໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບພະຍາດດັ່ງກ່າວຫຼາຍຂຶ້ນ ແລະ ນຳໄປເຜີຍແຜ່ໃຫ້ກວ້າງຂວາງກວ່າເກົ່າ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 77/ສພຊ
ນະຄອນຫຼວງວຽງຈັນ, ວັນທີ 20 ເດືອນມີນາ ປີ 2025

# ລັດຖະທຳມະນູນ
# ແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# (ສະບັບປັບປຸງ ປີ 2025)

## ຄຳນຳ

ນັບເປັນເວລາຫຼາຍພັນປີມາແລ້ວ ທີ່ປະຊາຊົນລາວບັນດາເຜົ່າ ໄດ້ດຳລົງຄົງຕົວ ແລະ ຂະຫຍາຍຕົວຢູ່ເທິງດິນແດນ ອັນແສນຮັກແຫ່ງນີ້. ເລີ່ມແຕ່ກາງສະຕະວັດທີ ສິບສີ່ ເປັນຕົ້ນມາ, ບັນພະບູລຸດຂອງພວກເຮົາ ໂດຍສະເພາະເຈົ້າຟ້າງຸ່ມ ໄດ້ພາປະຊາຊົນເຮົາ ກໍ່ຕັ້ງ ແລະ ສ້າງປະເທດລາວລ້ານຊ້າງ ໃຫ້ເປັນເອກະພາບ ແລະ ຈະເລີນຮຸ່ງເຮືອງ.

ຕັ້ງແຕ່ສະຕະວັດທີ ສິບແປດ ເປັນຕົ້ນມາ, ແຜ່ນດິນລາວໄດ້ຖືກບັນດາອິດທິກຳລັງພາຍນອກຈ້ອງມອງ, ແບ່ງແຍກ ແລະ ຮຸກຮານຢູ່ສະເໝີ. ປະຊາຊົນເຮົາໄດ້ພ້ອມກັນເສີມຂະຫຍາຍມູນເຊື້ອອັນພິລະອາດຫານ ບໍ່ຍອມຈຳນົນ ຂອງບັນພະບູລຸດ ແລະ ໄດ້ຕໍ່ສູ້ຢ່າງຕໍ່ເນື່ອງ, ໜຽວແໜ້ນ ເພື່ອກອບກູ້ເອກະລາດ, ອິດສະລະພາບ.

ແຕ່ປີ 1930 ເປັນຕົ້ນມາ ພາຍໃຕ້ການນຳພາອັນຖືກຕ້ອງຂອງພັກກອມມູນິດອິນດູຈີນ ໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວໃນປັດຈຸບັນ, ປະຊາຊົນລາວບັນດາເຜົ່າ ໄດ້ດຳເນີນການຕໍ່ສູ້ອັນຫຍຸ້ງຍາກລຳບາກ, ພິລະອາດຫານ ແລະເຕັມໄປດ້ວຍຄວາມເສຍສະລະຈົນສາມາດທັບມ້າງແອກຄອບຄອງ, ການກົດຂີ່ຂອງພວກລ່າເມືອງຂຶ້ນ ແລະ ລະບອບສັກດີນາ ໃຫ້ພັງທະລາຍລົງຢ່າງສິ້ນເຊີງ, ປົດປ່ອຍປະເທດຊາດຢ່າງສົມບູນ, ສ້າງຕັ້ງປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ເດືອນທັນວາ ປີ 1975, ອັນໄດ້ໄຂສັງກາດໃໝ່ທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນໄດ້ມີອິດສະລະພາບຢ່າງແທ້ຈິງ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍມານີ້, ປະຊາຊົນເຮົາ ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ ໄດ້ພ້ອມກັນປະຕິບັດ ສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໂດຍສະເພາະແມ່ນ ການດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເພື່ອຂຸດຄົ້ນແລະເສີມຂະຫຍາຍກຳລັງແຮງສັງລວມຂອງຊາດແລະຂອງຍຸກສະໄໝເຂົ້າໃນການສືບຕໍ່ສ້າງ ແລະ ບູລະນະ ລະບອບປະຊາທິປະໄຕປະຊາຊົນ, ເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ, ສ້າງປະກົມປັດໃຈກ້າວຂຶ້ນສູ່ສັງຄົມນິຍົມ.

ໃນໄລຍະໃໝ່ນີ້, ຊີວິດຂອງສັງຄົມ ໄດ້ຮຽກຮ້ອງໃຫ້ລັດເຮົາຕ້ອງຫັນໄປສູ່ການຄຸ້ມຄອງລັດ ຄຸ້ມຄອງເສດຖະ ກິດ-ສັງຄົມ ດ້ວຍກົດໝາຍ ຍ້ອນແນວນັ້ນ ລັດຖະທຳມະນູນສະບັບທຳອິດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ສ້າງຂຶ້ນ ແລະ ປະກາດໃຊ້ໃນວັນທີ 15 ເດືອນສິງຫາ ປີ 1991. ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ເຂົ້າສູ່ລວງເລິກ ລັດຖະທຳມະນູນສະບັບປີ 1991 ຈຶ່ງໄດ້ຮັບການປັບປຸງ ໃນປີ 2003 ແລະ ສະບັບປີ 2003 ໄດ້ຮັບການປັບປຸງ ໃນປີ 2015 ເພື່ອປັບປຸງລະບົບອຳນາດແຫ່ງລັດ ໃຫ້ມີປະສິດທິພາບ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດ ກັບພາກພື້ນ ແລະ ສາກົນ; ລັດຖະທຳມະນູນ ສະບັບປັບປຸງປີ 2025 ແນໃສ່ສືບຕໍ່ສ້າງການຫັນປ່ຽນ ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນລະບົບອຳນາດແຫ່ງລັດ ແລະ ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ.

ລັດຖະທຳມະນູນ ຂອງລະບອບປະຊາທິປະໄຕປະຊາຊົນ ຢູ່ປະເທດເຮົາ ໄດ້ຮັບຮູ້ຜົນງານອັນຍິ່ງໃຫຍ່ ທີ່ປະຊາຊົນ ຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະສ້າງສາປະເທດຊາດ ກໍຄື ພາລະກິດປ່ຽນແປງໃໝ່. ລັດຖະທຳມະນູນ ກຳນົດລະບອບ ການເມືອງ; ເສດຖະກິດ ແລະ ສັງຄົມ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສິດ ແລະພັນທະພື້ນຖານຂອງພົນລະເມືອງ; ລະບົບການຈັດຕັ້ງກົງຈັກລັດ.

ລັດຖະທຳມະນູນ ແມ່ນໝາກຜົນລວມຍອດແຫ່ງສະຕິປັນຍາ ແລະ ການປະກອບຄວາມເຫັນ ຢ່າງກວ້າງຂວາງຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງຢ່າງຈະແຈ້ງເຖິງເຈດຈຳນົງອັນສູງສົ່ງ, ຍາວນານ ແລະ ຄວາມຕັດສິນໃຈ ອັນແຮງກ້າຂອງວົງຄະນະຍາດແຫ່ງຊາດທີ່ຈະພ້ອມກັນສູ້ຊົນເພື່ອບັນລຸຈຸດໝາຍສ້າງປະເທດລາວໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ.

## ໝວດທີ I
## ລະບອບການເມືອງ

**ມາດຕາ 1**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດເອກະລາດ, ມີອຳນາດອະທິປະໄຕ ແລະ ຜືນແຜ່ນ ດິນອັນຄົບຖ້ວນລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ; ເປັນປະເທດເອກະພາບຂອງທຸກຊົນເຜົ່າ ທີ່ຕັດແຍກອອກຈາກກັນບໍ່ໄດ້.

**ມາດຕາ 2**

ລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ລັດປະຊາທິປະໄຕ ປະຊາຊົນ. ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ.

**ມາດຕາ 3**

ສິດເປັນເຈົ້າປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປະຕິບັດແລະຮັບປະກັນດ້ວຍການເຄື່ອນ ໄຫວຂອງລະບົບການເມືອງ ຊຶ່ງມີພັກປະຊາຊົນປະຕິວັດລາວ ເປັນແກນນຳ.

**ມາດຕາ 4**

ປະຊາຊົນເປັນຜູ້ສ້າງຕັ້ງອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຕົນ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນທ້ອງຖິ່ນ ແມ່ນ ປະຕິບັດຕາມຫຼັກການທົ່ວໄປ, ສະເໝີພາບ, ໂດຍກົງ ແລະ ລົງຄະແນນສຽງປິດລັບ.

ຜູ້ປ່ອນບັດເລືອກຕັ້ງ ມີສິດສະເໜີປົດຜູ້ແທນຂອງຕົນໄດ້ ຖ້າເຫັນວ່າມີການປະພຶດຕົນບໍ່ສົມກຽດສັກສີ ແລະ ຂາດຄວາມໄວ້ວາງໃຈຈາກປະຊາຊົນ.

**ມາດຕາ 5**

ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນແລະທຸກອົງການຂອງລັດ ໄດ້ຮັບການຈັດຕັ້ງ ແລະ ເຄື່ອນໄຫວ ຕາມຫຼັກການລວມສູນປະຊາທິປະໄຕ.

**ມາດຕາ 6**

ລັດປົກປ້ອງສິດອິດສະລະພາບ ແລະສິດປະຊາທິປະໄຕຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດ ຕ້ອງໂຄສະນາ ເຜີຍແຜ່ ອົບຮົມບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການ ໃຫ້ປະຊາຊົນ ຮັບຮູ້ຢ່າງກວ້າງຂວາງ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

ຫ້າມ ທຸກການກະທຳແບບອາດຍາສິດ, ຂົ່ມຂູ່ ອັນຈະກໍ່ຄວາມເສຍຫາຍເຖິງ ກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດຂອງປະຊາຊົນ.

**ມາດຕາ 7 (ປັບປຸງ)**

ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ບັນດາອົງການຈັດຕັ້ງສັງຄົມ ເປັນບ່ອນສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຊັ້ນຄົນຂອງທຸກຊົນເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ, ມີ ສິດ ແລະ ໜ້າທີ່ ຕິດຕາມ ກວດກາ ການເຄື່ອນໄຫວຂອງສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ ແລະ ສະມາຊິກຂອງສະພາດັ່ງກ່າວ.

**ມາດຕາ 8**

ລັດປະຕິບັດນະໂຍບາຍສາມັກຄີແລະສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຕົນ ແລະ ຂອງຊາດ. ຫ້າມທຸກ ການກະທຳທີ່ເປັນການແບ່ງແຍກ ແລະ ການປະພຶດທີ່ເປັນການຈຳແນກລະຫວ່າງຊົນເຜົ່າ.

ລັດ ນຳໃຊ້ທຸກມາດຕະການ ເພື່ອຂະຫຍາຍ ແລະ ຍົກລະດັບເສດຖະກິດ-ສັງຄົມ ຂອງທຸກຊົນເຜົ່າໃຫ້ສູງຂຶ້ນ.

**ມາດຕາ 9 (ປັບປຸງ)**

ລັດເຄົາລົບແລະປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະນິກະຊົນ ແລະ ສາສະນິກະຊົນອື່ນ, ປຸກລະດົມສົ່ງເສີມພຣະພິກຂຸສົງ-ສາມະເນນ, ນັກບວດ, ນັກສອນສາສະໜາ ໃຫ້ເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ.

ຫ້າມ ທຸກການກະທຳ ທີ່ເປັນການແບ່ງແຍກສາສະໜາ ແລະ ແບ່ງແຍກຄວາມສາມັກຄີ ຂອງປະຊາຊົນ.

**ມາດຕາ 10 (ປັບປຸງ)**

ລັດ ປົກຄອງ ແລະ ຄຸ້ມຄອງສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ.

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 11 (ໃໝ່)**

ຜືນແຜ່ນດິນອັນຄົບຖ້ວນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນທີ່ແສນຮັກ ແລະ ຫວງແຫນ ຊຶ່ງບໍ່ມີໃຜລ່ວງລ້ຳໄດ້ຢ່າງເດັດຂາດ.

ທຸກການກະທຳ ທີ່ເປັນການຕ້ານຄວາມເປັນ ເອກະລາດ, ເອກະພາບ, ອຳນາດອະທິປະໄຕ ແລະ ຜືນແຜ່ນ ດິນອັນຄົບຖ້ວນ, ຕ້ານພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ລ້ວນແຕ່ຖືກລົງໂທດຢ່າງເຂັ້ມງວດ.

**ມາດຕາ 12**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

## ໝວດທີ II
## ລະບອບເສດຖະກິດ ແລະ ສັງຄົມ

**ມາດຕາ 13 (ປັບປຸງ)**

ເສດຖະກິດແຫ່ງຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເສດຖະກິດ, ຫຼາຍຮູບການກຳມະສິດທີ່ຄົງຕົວຢ່າງຍາວນານ ມີຄວາມສະເໝີພາບ, ທັງແຂ່ງຂັນ ແລະ ຮ່ວມມືກັນ ພາຍໃຕ້ກົດໝາຍ ຢູ່ບົນພື້ນຖານການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສົ່ງເສີມເສດຖະກິດພູມປັນຍາ, ເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນໃຫ້ເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວຢ່າງ ຕໍ່ເນື່ອງ ໝັ້ນທ່ຽງ, ມີຄວາມກົມກຽວກັບການພັດທະນາສັງຄົມ ແລະ ເປັນມິດກັບສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໃຫ້ສູງຂຶ້ນ.

**ມາດຕາ 14 (ປັບປຸງ)**

ລັດ ສົ່ງເສີມ ທຸກພາກສ່ວນເສດຖະກິດພາຍໃນປະເທດ ລົງທຶນເຂົ້າໃນການພັດທະນາການຜະລິດ, ທຸລະກິດ, ການບໍລິການ, ການນຳໃຊ້ ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ປັນຍາປະດິດ ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເຮັດໃຫ້ເສດຖະກິດແຫ່ງຊາດ ເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 15 (ປັບປຸງ)**

ລັດ ສົ່ງເສີມ ການລົງທຶນຂອງຕ່າງປະເທດ ຢູ່ ສາທາລະນະ

ອ່ານຕໍ່ໜ້າ 4

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 3)

ລັດ ປະຊາທິປະໄຕ ປະຊາຊົນລາວ, ສ້າງສະພາບແວດລ້ອມ ອຳນວຍຄວາມສະດວກໃຫ້ແກ່ການນຳເອົາ ທຶນ, ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດ ກັບສິ່ງແວດລ້ອມ, ນະວັດຕະກຳ, ປັນຍາປະດິດ ແລະ ການຄຸ້ມຄອງທີ່ກ້າວໜ້າ ເຂົ້າສູ່ຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ.

ຊັບສິນບັດ ແລະ ທຶນ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫຼື ໂອນເປັນຂອງລັດ.

**ມາດຕາ 16**

ລັດ ປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງ ລັດ, ລວມໝູ່, ເອກະເທດ, ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 17**

ລັດ ປົກປ້ອງສິດ ກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ) ແລະ ສິດສືບທອດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມກົດໝາຍ.

ທີ່ດິນ, ແຮ່ທາດ, ນ້ຳ, ອາກາດ, ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ຊັບພະຍາກອນທຳມະຊາດອື່ນ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດ ເປັນຕົວແທນ ແລະ ຄຸ້ມຄອງ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມກົດໝາຍ.

**ມາດຕາ 18**

ລັດ ຄຸ້ມຄອງເສດຖະກິດ ຕາມກົນໄກເສດຖະກິດຕະຫຼາດທີ່ມີການດັດສົມດ້ວຍກົດໝາຍ, ເພີ່ມທະວີບົດບາດຄຸ້ມຄອງມະຫາພາກຂອງຂະແໜງການສູນກາງ, ປະຕິບັດຫຼັກການສົມທົບການຄຸ້ມຄອງລວມສູນ ເປັນເອກະພາບ ຂອງຂະແໜງການສູນກາງ ກັບການແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນ ຕາມກົດໝາຍ.

**ມາດຕາ 19 (ປັບປຸງ)**

ລັດສົ່ງເສີມການປົກປັກຮັກສາຊັບພະຍາກອນທຳມະຊາດ, ຟື້ນຟູສິ່ງແວດລ້ອມທີ່ຖືກ ທຳລາຍ, ຊຸດໂຊມ ແລະ ພັດທະນາ ໃຫ້ອຸດົມສົມບູນ ແລະ ຍືນຍົງ.

ທຸກອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາ, ອະນຸລັກ ຊີວະນານາພັນ, ສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ.

**ມາດຕາ 20**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍເປີດກວ້າງ ການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ໂດຍນຳໃຊ້ຮູບການສຳພັນເສດຖະກິດ ແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບ ບົນຫຼັກການເຄົາລົບ ເອກະລາດ, ອະທິປະໄຕ ຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 21 (ປັບປຸງ)**

ລັດ ໃຫ້ຄວາມສຳຄັນແກ່ການພັດທະນາເສດຖະກິດ ຕິດພັນກັບການພັດທະນາວັດທະນະທຳ, ສັງຄົມ ແລະ ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ໂດຍໃຫ້ບຸລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ.

**ມາດຕາ 22**

ລັດ ເອົາໃຈໃສ່ປະຕິບັດນະໂຍບາຍການສຶກສາແຫ່ງຊາດ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄຸນ ສົມບັດ, ມີຄວາມຮູ້, ຄວາມສາມາດ ແລະ ມີວິຊາຊີບ.

ລັດ ແລະ ສັງຄົມ ຕັ້ງໜ້າພັດທະນາການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂ ໃຫ້ປະຊາຊົນ ໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ພິການ.

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ເອກະຊົນລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດ ຕາມກົດໝາຍ.

**ມາດຕາ 23 (ປັບປຸງ)**

ລັດ ສົ່ງເສີມ ການອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍ ວັດທະນະທຳ ທີ່ເປັນເອກະລັກ, ເປັນມູນເຊື້ອອັນດີງາມ ຂອງຊາດ ແລະ ຂອງຊົນເຜົ່າ, ສົມທົບກັບການຮັບເອົາວັດທະນະທຳອັນຍອດຍິ່ງ ຂອງມວນ ມະນຸດ ຢ່າງມີການເລືອກເຟັ້ນ.

ລັດ ສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິລະປະ, ວັນນະຄະດີ, ການປະດິດຄິດແຕ່ງ, ຄຸ້ມຄອງ ແລະ ປົກປັກຮັກສາມໍຣະດົກທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ບູລະນະ, ປະຕິສັງຂອນ ວັດຖຸບູຮານ ແລະ ປູຊະນີຍະສະຖານ.

ລັດ ເອົາໃຈໃສ່ປັບປຸງ, ຂະຫຍາຍວຽກງານສື່ມວນຊົນ ເພື່ອຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ຫ້າມ ທຸກການເຄື່ອນໄຫວດ້ານວັດທະນະທຳ ຫຼື ນຳໃຊ້ສື່ມວນຊົນ ເພື່ອກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງຊາດ, ທຳລາຍ ຮີດຄອງປະເພນີ, ວັດທະນະທຳອັນດີງາມ ຫຼື ກຽດສັກສີຂອງຄົນລາວ.

**ມາດຕາ 24 (ປັບປຸງ)**

ລັດ ເອົາໃຈໃສ່ສົ່ງເສີມ ສະຕິປັນຍາ, ຫົວຄິດປະດິດສ້າງ ໃນວຽກງານຄົ້ນຄວ້າ, ວິໄຈ ແລະ ນຳໃຊ້ ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ປັນຍາປະດິດ, ປົກປ້ອງຊັບສິນທາງປັນຍາ ໄປຄຽງຄູ່ກັບການບຳລຸງ ແລະ ສ້າງນັກວິທະຍາສາດ ເພື່ອການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ມາດຕາ 25**

ລັດ ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍວຽກງານສາທາລະນະສຸກ ເພື່ອຮັກສາ ແລະ ສົ່ງເສີມສຸຂະພາບຂອງປະຊາຊົນ.

ລັດ ແລະ ສັງຄົມ ຕັ້ງໜ້າກໍ່ສ້າງ, ປັບປຸງລະບົບການກັນພະຍາດ, ປິ່ນປົວຄົນເຈັບຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ສ້າງເງື່ອນໄຂໃຫ້ປະຊາຊົນທຸກຄົນໄດ້ຮັບການເບິ່ງແຍງດ້ານສຸຂະພາບ ໂດຍສະເພາະ ແມ່ ແລະ ເດັກນ້ອຍ, ປະຊາຊົນຜູ້ທຸກຍາກ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ ເພື່ອໃຫ້ທຸກຄົນມີສຸຂະພາບດີ.

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ເອກະຊົນລົງທຶນໃນການບໍລິການດ້ານສາທາລະນະສຸກ ທີ່ກ້າວໜ້າ ແລະ ທັນສະໄໝ.

ຫ້າມ ທຸກການບໍລິການດ້ານສາທາລະນະສຸກ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 26**

ລັດ ແລະ ສັງຄົມ ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ລົງທຶນໃນການກິລາ-ກາຍຍະກຳຂອງມະຫາຊົນ ນັບທັງປະເພດກິລາ ທີ່ເປັນມູນເຊື້ອອັນດີງາມຂອງເຜົ່າຕ່າງໆ ແລະ ກິລາສາກົນ ເພື່ອຍົກລະດັບຄວາມສາມາດດ້ານການກິລາໃຫ້ສູງຂຶ້ນ, ເສີມສ້າງກຳລັງ ແລະ ສຸຂະພາບຂອງປະຊາຊົນ.

**ມາດຕາ 27**

ລັດ ແລະ ສັງຄົມ ເອົາໃຈໃສ່ພັດທະນາສີມືແຮງງານ; ຍົກສູງວິໄນແຮງງານ, ສົ່ງເສີມວິຊາຊີບ ແລະ ວຽກເຮັດງານທຳຂອງປະຊາຊົນ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ.

**ມາດຕາ 28**

ລັດ ແລະ ສັງຄົມ ເອົາໃຈໃສ່ປະຕິບັດນະໂຍບາຍສະຫວັດດີການສັງຄົມເປັນຢ່າງດີ ໂດຍສະເພາະຕໍ່ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ, ຜູ້ເສຍອົງຄະ, ຄອບຄົວຜູ້ເສຍສະລະຊີວິດ ເພື່ອພາລະກິດປະຕິວັດ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

**ມາດຕາ 29**

ລັດ, ສັງຄົມ ແລະ ຄອບຄົວ ເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ແມ່ຍິງ ແລະ ເດັກນ້ອຍ.

**ມາດຕາ 30 (ປັບປຸງ)**

ລັດ ແລະ ສັງຄົມ ສົ່ງເສີມ, ເປີດກວ້າງ ແລະ ພັດທະນາການທ່ອງທ່ຽວທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ກະສິກຳ ໃຫ້ກາຍເປັນອຸດສາຫະກຳທ່ອງທ່ຽວ ທີ່ມີເອກະລັກສະເພາະ ແລະ ເປັນຂະແໜງເສດຖະກິດທີ່ສຳຄັນຂອງຊາດ.

ຫ້າມ ການທ່ອງທ່ຽວ ທີ່ຈະສ້າງຄວາມເສື່ອມເສຍຕໍ່ວັດທະນະທຳອັນດີງາມຂອງຊາດ ຫຼື ເປັນການລະເມີດ ກົດໝາຍ.

### ໝວດທີ III
### ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

**ມາດຕາ 31**

ລັດ ປະຕິບັດ ແນວທາງ, ນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ ຮອບດ້ານ, ສ້າງ ແລະ ປັບປຸງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ, ເຂັ້ມແຂງ, ມີແບບແຜນ ແລະ ທັນສະໄໝ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ມີຄວາມສາມາດປະຕິບັດໜ້າທີ່ປົກປັກຮັກສາໝາກຜົນຂອງການປະຕິວັດ, ຊີວິດ, ຊັບສິນ ແລະ ການອອກແຮງງານຂອງປະຊາຊົນ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ໝັ້ງຄັ່ງ ເຂັ້ມແຂງ.

**ມາດຕາ 32 (ປັບປຸງ)**

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນພາລະກິດຂອງທົ່ວປວງຊົນ, ເປັນພັນທະ ແລະ ໜ້າທີ່ ຂອງທຸກການຈັດຕັ້ງ ແລະພົນລະເມືອງລາວທຸກຄົນ ໂດຍແມ່ນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນຫຼັກແຫຼ່ງ ໃນການປົກປັກຮັກສາຄວາມເປັນເອກະລາດ, ອຳນາດອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ; ປົກປັກຮັກສາຊີວິດ ແລະ ຊັບສິນຂອງປະຊາຊົນ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕປະຊາຊົນ.

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງສົມທົບແໜ້ນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 33 (ປັບປຸງ)**

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງເອົາໃຈໃສ່ປັບປຸງແລະກໍ່ສ້າງຕົນເອງ ໃຫ້ເຕີບໃຫຍ່ເຂັ້ມແຂງ, ເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ, ເປັນກຳລັງປະກອບອາວຸດຂອງປະຊາຊົນ ທີ່ມີທາດແທ້ ປະຕິວັດ, ລະບຽບວິໄນເຂັ້ມງວດ, ມີແບບແຜນ ແລະ ທັນສະໄໝ, ມີຄວາມສາມາດໃນການສູ້ຮົບສູງ; ເປັນກຳລັງຫຼັກແຫຼ່ງໃນການຮັກສາຄວາມໝັ້ນຄົງຂອງປະເທດຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ; ຕ້ານ, ສະກັດກັ້ນ ແລະ ແກ້ໄຂໄພພິບັດ.

ລັດ ເອົາໃຈໃສ່ພັດທະນາພື້ນຖານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະກອບອາວຸດຍຸດໂທປະກອນ, ພາຫະນະ, ເຕັກນິກ, ເຕັກໂນໂລຊີ, ວັດຖຸປະກອນ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາສະ ເພາະ, ສິນລະປະຍຸດ ແລະ ຍຸດທະວິທີ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ສູງຂຶ້ນ.

**ມາດຕາ 34 (ປັບປຸງ)**

ລັດ ແລະ ສັງຄົມ ເອົາໃຈໃສ່ປະຕິບັດນະໂຍບາຍ, ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ;ປະຕິບັດນະໂຍບາຍແນວຫຼັງຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອເພີ່ມທະວີຄວາມສາມາດໃນການປະຕິບັດໜ້າທີ່ປົກປັກຮັກສາປະເທດຊາດ ແລະ ຮັກສາຄວາມສະຫງົບຂອງສັງຄົມ.

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງຍົກສູງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ ແລະເຂົ້າຮ່ວມໃນການສ້າງສາປະເທດຊາດ.

### ໝວດທີ IV
### ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ

**ມາດຕາ 35**

ພົນລະເມືອງລາວ ແມ່ນ ຜູ້ມີສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ລັດ ຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນສິດທິມະນຸດ ແລະ ສິດທິພື້ນຖານຂອງພົນລະເມືອງ ຕາມກົດໝາຍ.

**ມາດຕາ 36**

ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 37**

ພົນລະເມືອງລາວ ຜູ້ມີອາຍຸແຕ່ ສິບແປດປີ ຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ ມີສິດສະໝັກຮັບເລືອກຕັ້ງ, ເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະ ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ, ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

**ມາດຕາ 38**

ພົນລະເມືອງລາວ ຍິງ-ຊາຍ ມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.

**ມາດຕາ 39**

ພົນລະເມືອງລາວ ມີສິດໄດ້ຮັບການສຶກສາ ຄົ້ນຄວ້າ, ຮ່ຳຮຽນ ເພື່ອພັດທະນາຕົນເອງ ໃຫ້ມີຄວາມກ້າວໜ້າ.

**ມາດຕາ 40**

ອ່ານຕໍ່ໜ້າ 5

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 4)

ພົນລະເມືອງລາວ ມີສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ.

ຜູ້ອອກແຮງງານ ມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບການຊ່ວຍ ເຫຼືອ ໃນກໍລະນີ ໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41**

ພົນລະເມືອງລາວ ມີສິດເສລີພາບໃນການຕັ້ງພູມລຳເນົາ ແລະ ໃນການໄປມາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42**

ພົນລະເມືອງລາວ ມີສິດສະເໜີ, ຮ້ອງຟ້ອງ ແລະ ຮ້ອງຂໍຄວາມເປັນທຳຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.

ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43**

ພົນລະເມືອງລາວ ມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຊີວິດ, ຮ່າງກາຍ, ກຽດສັກສີ ແລະ ເຄຫະສະຖານ.

ພົນລະເມືອງລາວ ຈະບໍ່ຖືກ ຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ຖ້າຫາກບໍ່ມີຄຳສັ່ງຂອງອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ, ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44**

ພົນລະເມືອງລາວ ມີສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 45**

ພົນລະເມືອງລາວ ມີສິດເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ຈັດຕັ້ງສະມາຄົມ ແລະ ເດີນຂະບວນ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 46**

ພົນລະເມືອງລາວ ມີສິດເສລີພາບໃນການຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ປະດິດສ້າງສິນລະປະ, ວັນນະຄະດີ ແລະ ເຄື່ອນໄຫວວັດທະນະທຳ ທີ່ບໍ່ຂັດ ກັບກົດໝາຍ.

**ມາດຕາ 47 (ປັບປຸງ)**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກກົດໝາຍ ຂອງພົນລະເມືອງລາວທີ່ຢູ່ຕ່າງປະເທດ.

ຄົນລາວທີ່ອາໄສຢູ່ຕ່າງປະເທດແມ່ນພາກສ່ວນໜຶ່ງທີ່ບໍ່ຕັດແຍກອອກຈາກວົງຄະນະຍາດແຫ່ງຊາດລາວ.

ລັດ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຄົນລາວທີ່ອາໄສຢູ່ຕ່າງປະເທດ ປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດລາວ, ຮັກສາການພົວພັນທີ່ດີກັບຄອບຄົວ, ຍາດພີ່ນ້ອງ ແລະ ບ້ານເກີດ ເມືອງນອນຂອງຕົນ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ.

**ມາດຕາ 48**

ພົນລະເມືອງລາວ ມີພັນທະເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢ່າງເຂັ້ມງວດ.

**ມາດຕາ 49**

ພົນລະເມືອງລາວ ມີພັນທະເສຍ ພາສີ ແລະ ອາກອນ ຕາມກົດໝາຍ.

**ມາດຕາ 50**

ພົນລະເມືອງລາວ ມີພັນທະປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມກົດໝາຍ.

**ມາດຕາ 51 (ປັບປຸງ)**

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດທີ່ເຄື່ອນໄຫວ ຢູ່ ສປປ ລາວ ມີສິດໄດ້ຮັບການປົກປ້ອງສິດ ແລະ ເສລີພາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ມີສິດສະເໜີ, ຮ້ອງຟ້ອງ, ຮ້ອງຂໍຄວາມເປັນທຳ ຕໍ່ອົງການລັດທີ່ກ່ຽວຂ້ອງ, ມີພັນທະເຄົາລົບລັດຖະທຳມະນູນ ແລະ ກົດໝາຍ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄົນຕ່າງປະເທດ ທີ່ມີຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງເປັນພິເສດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ມີສິດໄດ້ຮັບນາມມະຍົດພົນລະເມືອງກົດຕິມະສັກ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 52**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອະນຸຍາດການລີ້ໄພໃຫ້ແກ່ຄົນຕ່າງປະເທດ ທີ່ຖືກປາບປາມ ຍ້ອນໄດ້ທຳການຕໍ່ສູ້ ເພື່ອອິດສະລະພາບ, ຄວາມເປັນທຳ, ສັນຕິພາບ ແລະ ພາລະກິດວິທະຍາສາດ.

### ໝວດທີ V
### ສະພາແຫ່ງຊາດ

**ມາດຕາ 53**

ສະພາແຫ່ງຊາດ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ.

**ມາດຕາ 54 (ປັບປຸງ)**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ລັດຖະທຳມະນູນ ແລະ ກົດໝາຍ;

2. ພິຈາລະນາ, ຮັບຮອງເອົາ ວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບ ປະມານແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;

3. ພິຈາລະນາ, ຮັບຮອງເອົາ ນະໂຍບາຍພື້ນຖານດ້ານການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

4. ພິຈາລະນາ, ຮັບຮອງເອົາ ການກຳນົດ, ການປ່ຽນແປງ, ການລົບລ້າງ ຫຼື ການຍົກເວັ້ນ ອັດຕາພາສີ ແລະ ອາກອນ;

5. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ;

6. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານປະເທດ ແລະ ຮອງປະທານປະເທດ;

7. ເລືອກຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ;

8. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ;

9. ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ;

11. ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ;

11. ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ;

12. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາແຫ່ງຊາດ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກົງຈັກຂອງສະພາແຫ່ງຊາດ;

13. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງລັດຖະບານ, ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ;

14. ພິຈາລະນາ, ຮັບຮອງເອົາ ເຂດແດນຂອງ ນະຄອນຫຼວງ, ແຂວງ;

15. ພິຈາລະນາຍຸບ ສະພາປະຊາຊົນທ້ອງຖິ່ນ ໃນກໍລະນີສະພາປະຊາຊົນນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ;

16. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ;

17. ພິຈາລະນາ, ຮັບຮອງເອົາ ການໃຫ້ນິລະໂທດກຳ;

18. ພິຈາລະນາ, ຮັບຮອງເອົາ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ການຍົກເລີກ ສົນທິ ສັນຍາ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຊຶ່ງພົວພັນກັບບັນຫາສຳຄັນພື້ນຖານຂອງປະເທດຊາດ;

19. ພິຈາລະນາ, ຮັບຮອງເອົາ ບັນຫາສົງຄາມ ຫຼື ສັນຕິພາບ;

20. ຍົກເລີກນິຕິກຳຂອງພາກສ່ວນຕ່າງໆທີ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 55**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການ ຫ້າປີ.

ສະມາຊິກສະພາແຫ່ງຊາດ ແມ່ນ ພົນລະເມືອງລາວເປັນຜູ້ເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດໃໝ່ ຕ້ອງໃຫ້ແລ້ວພາຍໃນ ຫົກສິບວັນ ກ່ອນສະພາແຫ່ງຊາດ ຊຸດເກົ່າຈະໝົດອາຍຸການ. ໃນກໍລະນີເກີດສົງຄາມ ຫຼື ດ້ວຍສາເຫດອື່ນ ຊຶ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນ ສະພາແຫ່ງຊາດ ອາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນ ຫົກເດືອນ ພາຍຫຼັງສະພາບການໄດ້ກັບຄືນສູ່ປົກກະຕິ. ຖ້າມີຄວາມຈຳເປັນ ກໍສາມາດດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 56 (ປັບປຸງ)**

ຄະນະປະຈຳສະພາແຫ່ງຊາດ ແມ່ນ ອົງການປະຈຳການ ຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ.

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ປະທານ ແລະ ຮອງປະທານສະພາແຫ່ງຊາດ ເປັນທັງປະທານ ແລະ ຮອງປະທານ ຄະນະປະຈຳສະພາແຫ່ງຊາດ.

ປະທານຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ ດຳລົງຕຳແໜ່ງ ບໍ່ເກີນສອງສະໄໝ ຕິດຕໍ່ກັນ.

**ມາດຕາ 57 (ປັບປຸງ)**

ຄະນະປະຈຳສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ຮຽກໂຮມກອງປະຊຸມສະພາແຫ່ງຊາດ;

2. ສະເໜີສ້າງ, ປັບປຸງ, ຕີຄວາມໝາຍ, ອະທິບາຍ ລັດຖະທຳມະນູນ ແລະ ກົດໝາຍ;

3. ສະເໜີຮ່າງລັດຖະບັນຍັດຕໍ່ປະທານປະເທດ;

4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຄະນະສານຂອງສານປະຊາຊົນສູງສຸດ ແລະ ຜູ້ພິພາກສາຂອງສານປະຊາຊົນ;

5. ແຕ່ງຕັ້ງ ຄະນະກຳມະການໄອຍະການປະຊາຊົນສູງສຸດ;

6. ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ;

7. ພິຈາລະນາ, ຕົກລົງ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ການຍົກເລີກ ສົນທິສັນຍາ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ;

8. ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ.

**ມາດຕາ 58 (ປັບປຸງ)**

ສະພາແຫ່ງຊາດ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ, ຄະນະປະຈຳສະພາແຫ່ງຊາດ ອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍໄດ້ ຖ້າເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ.

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດ.

**ມາດຕາ 59 (ປັບປຸງ)**

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ, ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 55, 67, 69 ແລະ ມາດຕາ 121 ຂອງລັດຖະທຳມະນູນ.

**ມາດຕາ 60 (ປັບປຸງ)**

ການຈັດຕັ້ງ ທີ່ມີສິດສະເໜີສ້າງກົດໝາຍ ມີ ດັ່ງນີ້:

1. ປະທານປະເທດ;

ອ່ານຕໍ່ໜ້າ 5

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 5)

2. ຄະນະປະຈຳສະພາແຫ່ງຊາດ;
3. ລັດຖະບານ;
4. ສານປະຊາຊົນສູງສຸດ;
5. ອົງການໄອຍະການປະຊາຊົນສູງສຸດ;
6. ອົງການກວດກາແຫ່ງລັດ;
7. ອົງການກວດສອບແຫ່ງລັດ;
8. ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

**ມາດຕາ 61 (ປັບປຸງ)**

ກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວນັ້ນ ຕ້ອງໄດ້ປະກາດໃຊ້ໂດຍປະທານປະເທດ ຢ່າງຊ້າ ບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນໄດ້ຮັບຮອງ ເປັນຕົ້ນໄປ. ໃນໄລຍະເວລາດັ່ງກ່າວນັ້ນ ປະທານປະເທດ ມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາຄືນໃໝ່, ກົດໝາຍທີ່ໄດ້ນຳມາພິຈາລະນາຄືນໃໝ່ນັ້ນ ຖ້າວ່າສະພາແຫ່ງຊາດ ຫາກຍັງຕົກລົງຢັ້ງຢືນເອົາຕາມເດີມແລ້ວ ປະທານປະເທດ ກໍຕ້ອງປະກາດໃຊ້ພາຍໃນເວລາ ສິບຫ້າວັນ.

ກົດໝາຍທີ່ປະທານປະເທດປະກາດໃຊ້ແລ້ວນັ້ນ ຕ້ອງໄດ້ລົງໃນຈົດໝາຍເຫດທາງລັດຖະການ, ຍົກເວັ້ນ ກໍລະນີທີ່ກົດໝາຍໄດ້ກຳນົດໄວ້ສະເພາະ.

**ມາດຕາ 62**

ບັນຫາທີ່ກ່ຽວພັນເຖິງຊາຕາກຳຂອງປະເທດຊາດ ແລະ ຜົນປະໂຫຍດອັນໃຫຍ່ຫຼວງຂອງປະຊາຊົນ ຕ້ອງໄດ້ຮັບການຄົ້ນຄວ້າພິຈາລະນາຈາກ ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 63 (ປັບປຸງ)**

ສະພາແຫ່ງຊາດ ສ້າງຕັ້ງບັນດາກຳມາທິການ ແລະ ຫ້ອງວ່າການ ເພື່ອເປັນເສນາທິການໃຫ້ແກ່ ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 64 (ປັບປຸງ)**

ສະມາຊິກສະພາແຫ່ງຊາດ ມີສິດຊັກຖາມ ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດແລະຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ.

ບຸກຄົນທີ່ຖືກຊັກຖາມນັ້ນ ຕ້ອງຊີ້ແຈງ ຕໍ່ກອງປະຊຸມສະພາແຫ່ງຊາດ ດ້ວຍວາຈາ ຫຼື ເປັນລາຍລັກອັກ ສອນ.

**ມາດຕາ 65**

ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ ແລະ ກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກ ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງລາຍງານໃນທັນທີໃຫ້ ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ.

ການສືບສວນ-ສອບສວນ ບໍ່ເປັນສາເຫດພາໃຫ້ສະມາຊິກສະພາແຫ່ງຊາດທີ່ຖືກດຳເນີນຄະດີນັ້ນຂາດປະຊຸມສະພາແຫ່ງຊາດ.

### ໝວດທີ VI
### ປະທານປະເທດ

**ມາດຕາ 66 (ປັບປຸງ)**

ປະທານປະເທດ ເປັນປະມຸກລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນຜູ້ຕາງໜ້າປະຊາຊົນລາວບັນດາເຜົ່າທັງຢູ່ພາຍໃນແລະຕ່າງປະເທດ, ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນສູນກາງ, ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ ເພື່ອຮັບປະກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງປະເທດຊາດ.

**ມາດຕາ 67 (ປັບປຸງ)**

ປະທານປະເທດ ໄດ້ຮັບການເລືອກຕັ້ງຈາກສະພາແຫ່ງຊາດ ດ້ວຍຄະແນນສຽງຫຼາຍກວ່າ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ປະທານປະເທດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ປະທານປະເທດ ດຳລົງຕຳແໜ່ງບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ປະທານປະເທດ ມີຫ້ອງວ່າການສຳນັກງານປະທານປະເທດ.

**ມາດຕາ 68 (ປັບປຸງ)**

ປະທານປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ;
2. ອອກລັດຖະບັນຍັດ ແລະ ລັດຖະດຳລັດ;
3. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມພິເສດຂອງລັດຖະບານ, ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນກໍລະນີຈຳເປັນ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ພາຍຫຼັງສະພາແຫ່ງຊາດ ໄດ້ຮັບຮອງເອົາ;
5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານອົງການກວດກາແຫ່ງລັດ ແລະ ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ສູນກາງ, ຮອງປະທານອົງການກວດສອບແຫ່ງລັດ;
6. ຕົກລົງເລື່ອນຊັ້ນ ຫຼື ປົດຊັ້ນນາຍພົນ ຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
7. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງວ່າການສຳນັກງານປະທານປະເທດ;
8. ແຕ່ງຕັ້ງເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຫຼື ຮຽກກັບຄືນປະເທດ; ຮັບຮອງເອົາ ເອກອັກຄະລັດຖະທູດ ຫຼື ຜູ້ຕາງໜ້າທີ່ມີອຳນາດເຕັມຂອງຕ່າງປະເທດ ທີ່ມາປະຈຳຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ຕົກລົງ ການປະດັບ, ຫຼຸດ ຫຼື ປົດ ຊັ້ນເອກອັກຄະລັດຖະທູດ;
9. ປະກາດການແຕ່ງຕັ້ງ ຄະນະກຳມະການເລືອກຕັ້ງລະດັບຊາດ, ວັນເລືອກຕັ້ງ, ຈຳນວນຜູ້ສະໝັກຮັບເລືອກຕັ້ງ, ຈຳນວນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນແຕ່ລະເຂດເລືອກຕັ້ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
10. ປະກາດ ສົງຄາມ ຫຼື ສັນຕິພາບ ຕາມການຕົກລົງຂອງສະພາແຫ່ງຊາດ, ຕົກລົງລະດົມພົນທົ່ວໄປ ຫຼື ເປັນພາກສ່ວນ, ຕົກລົງພາວະສຸກເສີນໃນທົ່ວປະເທດ ຫຼື ໃນບາງທ້ອງຖິ່ນ;
11. ຕົກລົງ ມອບ ຫຼື ປະດັບ ຫຼຽນຄຳແຫ່ງຊາດ, ຫຼຽນກຽດຕິຄຸນ, ຫຼຽນໄຊ, ນາມມະຍົດສູງສຸດ ແຫ່ງລັດ ແລະ ຕົກລົງໃຫ້ການຍ້ອງຍໍດ້ວຍຮູບການອື່ນ;
12. ຕົກລົງໃຫ້ອະໄພຍະໂທດ; ປະກາດໃຫ້ນິລະໂທດກຳ ພາຍຫຼັງການຮັບຮອງຂອງສະພາແຫ່ງຊາດ;
13. ຕົກລົງໃຫ້ລີ້ໄພການເມືອງແກ່ຄົນຕ່າງປະເທດ;
14. ຕົກລົງ ໃຫ້ເຈລະຈາ ຫຼື ລົງນາມ; ປະກາດການໃຫ້ສັດຕະຍາບັນ ຫຼື ການເຂົ້າເປັນພາຄີ; ການໂຈະສົນທິສັນຍາ ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 69**

ປະທານປະເທດ ມີຮອງປະທານປະເທດ ຊຶ່ງສະພາແຫ່ງຊາດເປັນຜູ້ເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງຫຼາຍກວ່າ ສອງສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ຮອງປະທານປະເທດ ປະຕິບັດໜ້າທີ່ຕາມການມອບໝາຍຂອງປະທານປະເທດ ແລະ ຕາງໜ້າໃຫ້ປະທານປະເທດ ໃນເວລາປະທານປະເທດຕິດຂັດ.

ໃນກໍລະນີປະທານປະເທດບໍ່ສາມາດປະຕິບັດໜ້າທີ່ໄດ້, ຮອງປະທານປະເທດ ເປັນຜູ້ຮັກສາການແທນ ຈົນກວ່າສະພາແຫ່ງຊາດ ຈະເລືອກຕັ້ງປະທານປະເທດຜູ້ໃໝ່.

### ໝວດທີ VII
### ລັດຖະບານ

**ມາດຕາ 70**

ລັດຖະບານ ແມ່ນ ອົງການບໍລິຫານ ມີພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ລັດຖະບານ ຮັບຜິດຊອບຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ.

**ມາດຕາ 71 (ປັບປຸງ)**

ລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດ ຂອງປະທານປະເທດ;
2. ສະເໜີຮ່າງກົດໝາຍຕໍ່ສະພາແຫ່ງຊາດ, ຮ່າງລັດຖະບັນຍັດຕໍ່ຄະນະປະຈຳສະພາແຫ່ງຊາດ, ຮ່າງລັດຖະດຳລັດຕໍ່ປະທານປະເທດ;
3. ອອກດຳລັດ, ມະຕິ ກ່ຽວກັບການ ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງ ປະເທດ;
4. ກຳນົດວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ແລ້ວສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາ, ຮັບຮອງ;
5. ສະເໜີ ສະພາແຫ່ງຊາດ ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກະຊວງ,ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ,ແຂວງແລະການກຳນົດເຂດແດນຂອງນະຄອນຫຼວງ,ແຂວງ;
6. ຕົກລົງ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ທະບວງ ຫຼື ອົງການລັດທຽບເທົ່າທະບວງ;
7. ຕົກລົງ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ເມືອງ, ນະຄອນ ແລະ ກຳນົດເຂດແດນຂອງ ເມືອງ, ນະຄອນ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງຮັບຮອງເອົາ;
8. ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ດ່ານສາກົນ;
9. ຊີ້ນຳ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
10. ຕົກລົງ ໃຫ້ສັນຊາດ, ຖອນສັນຊາດ, ປະສັນຊາດ, ໃຫ້ສັນຊາດລາວຄືນ;
11. ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;
12. ຕົກລົງ ໃຫ້ລົງນາມ; ພິຈາລະນາ ຮັບຮອງ, ເຂົ້າຮ່ວມເປັນພາຄີ ຫຼື ຍົກເລີກ ສົນທິສັນຍາ ແລະ ສັນຍາສາກົນ ໃນນາມລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
13. ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ນິຕິກຳອື່ນ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ;
14. ລາຍງານການເຄື່ອນໄຫວຂອງຕົນຕໍ່ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ.

**ມາດຕາ 72**

ລັດຖະບານ ປະກອບດ້ວຍ ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີແລະຫົວໜ້າອົງການລັດທຽບເທົ່າກະຊວງ.

ລັດຖະບານ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ, ສະມາຊິກລັດຖະບານ ດຳລົງຕຳແໜ່ງຢູ່ບ່ອນເກົ່າ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

**ມາດຕາ 73 (ປັບປຸງ)**

ນາຍົກລັດຖະມົນຕີ ເປັນຫົວໜ້າລັດຖະບານ ແລະ ຕາງໜ້າລັດຖະບານ ນຳພາ ຊີ້ນຳ ການເຄື່ອນໄຫວວຽກງານຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ; ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າທະບວງ, ຮອງຫົວໜ້າທະບວງ, ຫົວໜ້າກົມ; ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ; ສະເໜີເລື່ອນຊັ້ນ ຫຼື ປົດຊັ້ນນາຍພົນ; ເລື່ອນຊັ້ນ ຫຼື ປົດຊັ້ນ ພັນເອກ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 74 (ປັບປຸງ)**

ຮອງນາຍົກລັດຖະມົນຕີ ຊ່ວຍນາຍົກລັດຖະມົນຕີ ໃນການຊີ້ນຳວຽກງານຂອງລັດຖະບານ ແລະອົງການປົກຄອງທ້ອງຖິ່ນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງນາຍົກລັດຖະມົນຕີ.

ຮອງນາຍົກລັດຖະມົນຕີທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ

ອ່ານຕໍ່ໜ້າ 7

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 6)

ໃນເວລາ ນາຍົກລັດຖະມົນຕີ ຕິດຂັດ.

**ມາດຕາ 75**

ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບານ, ຊີ້ນຳ, ຄຸ້ມຄອງ ແລະ ກວດກາການປະຕິບັດວຽກງານຂອງຂະແໜງການທີ່ຕົນຮັບຜິດຊອບ, ພົວພັນຮ່ວມມື, ເຊັນສັນຍາ ແລະ ອະນຸສັນຍາກັບຕ່າງປະເທດ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 76**

ສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ອາດຈະຖືກສະພາແຫ່ງຊາດ ພິຈາລະນາ ແລະ ລົງມະຕິ ບໍ່ໄວ້ວາງໃຈ ຖ້າວ່າຄະນະປະຈຳສະພາແຫ່ງຊາດ ຫຼື ມີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດຫາກສະເໜີບັນຫານີ້ຂຶ້ນ.

ໃນກໍລະນີສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ຖືກສະພາແຫ່ງຊາດ ລົງມະຕິບໍ່ໄວ້ວາງ ໃຈນັ້ນ ປະທານປະເທດມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາຄືນໃໝ່ ຫຼື ຕົກລົງໃຫ້ລາອອກ.

### ໝວດທີ VIII
### ສະພາປະຊາຊົນທ້ອງຖິ່ນ

**ມາດຕາ 77 (ປັບປຸງ)**

ສະພາປະຊາຊົນທ້ອງຖິ່ນ ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຢູ່ທ້ອງຖິ່ນ, ປະຕິບັດພາລະບົດບາດ ພິຈາລະນາ, ຮັບຮອງເອົານິຕິກຳທີ່ມີຜົນບັງຄັບ ທົ່ວໄປ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, ຕິດຕາມກວດກາການເຄື່ອນໄຫວຂອງບັນດາອົງການລັດໃນທ້ອງຖິ່ນຕົນ.

ສະພາປະຊາຊົນທ້ອງຖິ່ນ ສ້າງຕັ້ງຂຶ້ນ ຕາມຂັ້ນຂອງການປົກຄອງທ້ອງຖິ່ນ ຊຶ່ງປະກອບດ້ວຍ ສະພາປະຊາຊົນ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ. ສຳລັບສະພາປະຊາຊົນ ຂັ້ນເມືອງ ແລະ ຂັ້ນຕາແສງ ອາດຈະສ້າງຕັ້ງຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ.

ສະພາປະຊາຊົນທ້ອງຖິ່ນ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 78 (ປັບປຸງ)**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ນິຕິກຳທີ່ມີຜົນບັງຄັບທົ່ວໄປຂອງທ້ອງຖິ່ນຕົນ;
2. ພິຈາລະນາ, ຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມາ2. ນແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ;
3. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
4. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ;
5. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາປະຊາຊົນຂັ້ນແຂວງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກົງຈັກຂອງສະພາປະຊາຊົນຂັ້ນແຂວງ;
6. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
7. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ; ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຂອງຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂອງນະຄອນຫຼວງ, ແຂວງ, ປະທານຄະນະກຳມະການປົກຄອງເມືອງ, ນະຄອນ;
8. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ກ່ຽວກັບການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ພະແນກ, ອົງການລັດທຽບເທົ່າພະແນກ ຂອງນະຄອນຫຼວງ, ແຂວງ;
9. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນ ນະຄອນຫຼວງ, ແຂວງ ແລະ ເຂດ;
10. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ແລະ ເຂດ;
11. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ນະຄອນ, ຕາແສງ ແລະ ການກຳນົດເຂດແດນຂອງ ເມືອງ, ນະຄອນ, ຕາແສງ;
12. ຕິດຕາມ ກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນແລະກົດໝາຍຂອງບັນດາອົງການລັດຂອງທ້ອງຖິ່ນຕົນ;
13. ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ນິຕິກຳອື່ນ ຂອງທຸກຂະແໜງການ ທີ່ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 79 (ປັບປຸງ)**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ປະຕິບັດ ໜ້າທີ່ແທນສະພາປະຊາຊົນຂັ້ນແຂວງ ໃນເວລາບໍ່ໄດ້ເປີດກອງປະຊຸມ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການ.

ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ ເປັນທັງປະທານ ແລະ ຮອງປະທານ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການແລະຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ ດຳລົງຕຳແໜ່ງ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

**ມາດຕາ 80 (ປັບປຸງ)**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ພິຈາລະນາ, ຮັບຮອງເອົາ ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ແລະ ເຂດ;
4. ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ;
5. ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 81 (ປັບປຸງ)**

ສະພາປະຊາຊົນຂັ້ນແຂວງ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ. ຄະນະປະຈຳສະພາປະຊາຊົນຂັ້ນແຂວງອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍໄດ້ ຖ້າເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະດຳເນີນໄດ້ກໍຕໍ່ເມື່ອມີສະມາຊິກສະພາປະຊາຊົນຂັ້ນແຂວງເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ.

**ມາດຕາ 82**

ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 83 (ປັບປຸງ)**

ສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງບັນດາຄະນະກຳມະການ ແລະຫ້ອງວ່າການ ເພື່ອເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 84 (ປັບປຸງ)**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີສິດຊັກຖາມ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ; ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ; ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ປະທານອົງການກວດສອບປະຈຳພາກ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ.

ບຸກຄົນທີ່ຖືກຊັກຖາມ ຕ້ອງຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ດ້ວຍວາຈາ ຫຼື ເປັນລາຍລັກອັກສອນ.

**ມາດຕາ 85 (ປັບປຸງ)**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ ແລະ ກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກ ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງລາຍງານ ໃນທັນທີໃຫ້ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ.

ການສືບສວນ-ສອບສວນ ບໍ່ເປັນສາເຫດພາໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ຖືກດຳເນີນຄະດີນັ້ນ ຂາດປະຊຸມສະພາປະຊາຊົນຂັ້ນແຂວງ.

### ໝວດທີ IX
### ອົງການປົກຄອງທ້ອງຖິ່ນ

**ມາດຕາ 86 (ປັບປຸງ)**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງການປົກຄອງທ້ອງຖິ່ນ ອອກເປັນ ສາມຂັ້ນ ຄື ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ສຳລັບບ້ານ ແມ່ນ ການຈັດຕັ້ງຊຸມຊົນ.

**ມາດຕາ 87 (ປັບປຸງ)**

ອົງການປົກຄອງທ້ອງຖິ່ນ ແມ່ນ ອົງການບໍລິຫານຂັ້ນທ້ອງຖິ່ນ, ມີພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະ ເປັນເອກະພາບໃນຂອບເຂດທ້ອງຖິ່ນຂອງຕົນ.

ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບຕໍ່ ລັດຖະບານ ແລະ ສະພາປະຊາຊົນທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍ ຄະນະກຳມະການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ຄະນະກຳມະການປົກຄອງແຕ່ລະຂັ້ນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ຄະນະກຳມະການປົກຄອງແຕ່ລະຂັ້ນ ມີອາຍຸການເທົ່າກັບອາຍຸການຂອງສະພາປະຊາຊົນທ້ອງຖິ່ນ.

**ມາດຕາ 88 (ປັບປຸງ)**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິສະພາປະຊາຊົນທ້ອງຖິ່ນຕົນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງທ້ອງຖິ່ນ;
2. ສ້າງ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອສະເໜີສະພາປະຊາຊົນທ້ອງຖິ່ນຕົນ ພິຈາລະນາ, ຮັບຮອງເອົາ;
3. ຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;
4. ອອກນິຕິກຳ ກ່ຽວກັບການຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ຕິດຕາມ ກວດກາ ການປະຕິບັດໜ້າທີ່ວຽກງານຂອງອົງການຈັດຕັ້ງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ຄຸ້ມຄອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ທ້ອງຖິ່ນຂອງຕົນ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງປະຊາຊົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຂອງລັດຖະບານ;
9. ສະຫຼຸບ, ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງທ້ອງຖິ່ນ ໃຫ້ຂັ້ນເທິງຖັດຕົນ ແລະ ສະພາປະຊາຊົນທ້ອງຖິ່ນຕົນ ຢ່າງເປັນປົກກະຕິ.

### ໝວດທີ X
### ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ

**ມາດຕາ 89 (ປັບປຸງ)**

ສານປະຊາຊົນ ແມ່ນ ອົງການຕຸລາການ; ມີແຕ່ສານປະຊາ

ອ່ານຕໍ່ໜ້າ 7

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 7)

ຊົນເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນ ແລະ ພິພາກສາ ຄະດີ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສານປະຊາຊົນ ຕັດສິນຄະດີ ເປັນຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ.

ສານປະຊາຊົນ ມີໜ້າທີ່ ປົກປ້ອງ ຄວາມຍຸຕິທຳ, ສິດທິບຸກຄົນ, ລະບອບປະຊາທິປະໄຕປະຊາຊົນ, ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມກົດໝາຍ.

**ມາດຕາ 90 (ປັບປຸງ)**

ສານປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ ສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນກໍລະນີຈຳເປັນ ອາດຈະສ້າງຕັ້ງສານສະເພາະຕາມຂະແໜງການ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 91 (ປັບປຸງ)**

ສານປະຊາຊົນສູງສຸດ ແມ່ນ ອົງການພິພາກສາສູງສຸດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສານປະຊາຊົນສູງສຸດ ກວດກາ, ສັງລວມການຕັດສິນຄະດີ ຂອງສານປະຊາຊົນ ແລະ ຄຸ້ມຄອງຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 92 (ປັບປຸງ)**

ປະທານສານປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ, ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ ແລະ ດຳລົງຕຳແໜ່ງ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ຮອງປະທານສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ.

ຫົວໜ້າຄະນະສານຂອງສານປະຊາຊົນສູງສຸດແລະຜູ້ພິພາກສາຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 93 (ປັບປຸງ)**

ສານປະຊາຊົນ ພິຈາລະນາຕັດສິນເປັນໝູ່ຄະນະ ແລະ ລົງຄຳຕັດສິນຖືເອົາຕາມສຽງສ່ວນຫຼາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ເວັ້ນເສຍ ແຕ່ກໍລະນີຕັດສິນ ໂດຍຜູ້ພິພາກສາຜູ້ດຽວ.

ໃນເວລາພິຈາລະນາຕັດສິນ ຜູ້ພິພາກສາ ຕ້ອງເປັນເອກະລາດ ແລະ ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 94**

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ, ເວັ້ນເສຍແຕ່ກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 95 (ປັບປຸງ)**

ຄູ່ຄວາມ ມີສິດ ໂຕ້ແຍ່ງ, ໂຕ້ຖຽງ ໃນການດຳເນີນຄະດີ.

ຜູ້ຖືກຫາ ມີສິດ ຮັບຊາບ, ແກ້ຂໍ້ກ່າວຫາ ຫຼື ຕໍ່ສູ້ຄະດີ ທີ່ຕົນຖືກກ່າວຫາດ້ວຍ ຕົນເອງ ຫຼື ຜູ້ປົກປ້ອງ ຫຼື ທະນາຍຄວາມ.

ທະນາຍຄວາມ ມີສິດຊ່ວຍເຫຼືອທາງດ້ານກົດໝາຍແກ່ ຄູ່ຄວາມ ແລະ ຜູ້ຖືກຫາ.

**ມາດຕາ 96 (ປັບປຸງ)**

ຜູ້ຕາງໜ້າອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ ມີສິດເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 97 (ປັບປຸງ)**

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 98 (ປັບປຸງ)**

ອົງການໄອຍະການປະຊາຊົນ ແມ່ນອົງການ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ.

**ມາດຕາ 99**

ອົງການໄອຍະການປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 100 (ປັບປຸງ)**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຊີ້ນຳການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນທຸກຂັ້ນ.

**ມາດຕາ 101 (ປັບປຸງ)**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼືປົດຕຳແໜ່ງ ໂດຍສະພາແຫ່ງຊາດ, ມີອາຍຸການເທົ່າກັບອາຍຸການ ຂອງສະພາແຫ່ງຊາດ ແລະ ດຳລົງຕຳແໜ່ງ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງແລະບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 102 (ປັບປຸງ)**

ໃນເວລາດຳເນີນຄະດີນັ້ນ ພະນັກງານໄອຍະການຂອງອົງການໄອຍະການປະຊາຊົນ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

### ໝວດທີ XI
### ການກວດກາລັດ ແລະ ການກວດສອບແຫ່ງລັດ

**ມາດຕາ 103 (ໃໝ່)**

ການກວດກາລັດແມ່ນການເຄື່ອນໄຫວຂອງອົງການກວດກາລັດໃນການກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ ແລະ ບຸກຄົນ ພ້ອມທັງສະເໜີວິທີການ ແລະ ມາດຕະການແກ້ໄຂ ຕາມກົດໝາຍ.

**ມາດຕາ 104 (ໃໝ່)**

ອົງການກວດກາລັດປະຕິບັດພາລະບົດບາດຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ທີ່ເປັນການລະເມີດກົດໝາຍ.

ລະບົບການຈັດຕັ້ງ ຂອງອົງການກວດກາລັດ ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 105 (ໃໝ່)**

ປະທານອົງການກວດກາແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ, ມີຄວາມຮັບ ຜິດຊອບຕໍ່ ປະທານປະເທດ, ສະພາແຫ່ງຊາດ ກ່ຽວກັບວຽກງານ ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ.

ປະທານອົງການກວດກາແຫ່ງລັດ ດຳລົງຕຳແໜ່ງ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ຮອງປະທານອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ.

ປະທານ, ຮອງປະທານ ອົງການກວດກາລັດແຕ່ລະຂັ້ນ ຖືກແຕ່ງຕັ້ງ, ຍົກຍ້າຍຫຼືປົດຕຳແໜ່ງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 106 (ໃໝ່)**

ອົງການກວດກາລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ, ໂຄງການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງອົງການຈັດຕັ້ງ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;
2. ກວດກາການນຳໃຊ້ສິດ, ການປະຕິບັດໜ້າທີ່ແລະຄວາມຮັບຜິດຊອບຂອງ ພະນັກງານ-ລັດຖະ ກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ບຸກຄົນອື່ນ ທີ່ມີການປະພຶດລະເມີດກົດໝາຍ;
3. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ແລະ ຜົນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
4. ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ, ກວດກາຕາມຜົນການກວດສອບ ຕາມມະຕິຂອງ ສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ, ດຳເນີນການຮັບແຈ້ງຊັບສິນ ແລະ ລາຍຮັບ;
5. ພິຈາລະນາ ແລະ ແກ້ໄຂຄຳສະເໜີ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
6. ສະເໜີ ມາດຕະການ ແລະ ວິທີການແກ້ໄຂຜົນຂອງການກວດກາ;
7. ລາຍງານການເຄື່ອນໄຫວວຽກງານ ໂດຍສະເພາະ ຜົນການກວດກາ ແລະ ຜົນການແກ້ໄຂການກວດກາ ຕໍ່ກອງປະຊຸມ ສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ.

**ມາດຕາ 107 (ປັບປຸງ)**

ການກວດສອບແຫ່ງລັດ ແມ່ນການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ ໃນການກວດສອບການຄຸ້ມຄອງ ການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ.

**ມາດຕາ 108 (ປັບປຸງ)**

ອົງການກວດສອບແຫ່ງລັດ ປະຕິບັດພາລະບົດບາດ ກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງ, ສະເໜີມາດຕະການແກ້ໄຂ, ຊຸກຍູ້ ແລະ ຕິດຕາມ ການແກ້ໄຂຜົນການກວດສອບ.

ລະບົບການຈັດຕັ້ງຂອງອົງການກວດສອບແຫ່ງລັດ ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 109 (ປັບປຸງ)**

ປະທານອົງການກວດສອບແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ, ຮັບຜິດຊອບໂດຍກົງຕໍ່ສະພາແຫ່ງຊາດ ແລະ ລາຍງານຕໍ່ປະທານປະເທດ, ນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບວຽກງານກວດສອບແຫ່ງລັດ.

ປະທານອົງການກວດສອບແຫ່ງລັດ ດຳລົງຕຳແໜ່ງ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ຮອງປະທານອົງການກວດສອບແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ.

**ມາດຕາ 110 (ປັບປຸງ)**

ອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

ດຳເນີນການກວດສອບເປັນເອກະລາດຕາມກົດໝາຍເພື່ອຢັ້ງຢືນຄວາມຖືກຕ້ອງຂອງການສ້າງ, ການດັດແກ້ແຜນງົບປະມານແຫ່ງລັດ, ແຜນລາຍຮັບ, ແຜນລາຍຈ່າຍ, ແຜນການລົງທຶນ, ການຄາດຄະເນຜົນໄດ້ຮັບ ເລີ່ມແຕ່ຫົວທີ, ເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດ;

ຄຸ້ມຄອງ, ຕິດຕາມ ກວດກາ ການດຳເນີນວຽກງານຂອງຕົນ ແລະ ອົງການກວດສອບປະຈຳພາກ ຕາມກົດໝາຍ;

ລາຍງານການເຄື່ອນໄຫວວຽກງານຂອງຕົນ ແລະ ຜົນການກວດສອບ ຕາມກົດໝາຍ;

ສະເໜີ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕໍ່ເປົ້າໝາຍ ທີ່ລະເມີດກົດໝາຍ ຈາກຜົນການກວດສອບ.

### ໝວດທີ XII
### ຄະນະກຳມະການເລືອກຕັ້ງ

**ມາດຕາ 111 (ປັບປຸງ)**

ຄະນະກຳມະການເລືອກຕັ້ງປະກອບດ້ວຍຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ແມ່ນການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດ ຕົກລົງສ້າງຕັ້ງ ແລ້ວສະເໜີປະທານປະເທດອອກລັດຖະດຳລັດປະກາດເປັນທາງການ, ມີພາລະບົດບາດ ຊີ້ນຳການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນທ້ອງຖິ່ນ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ແມ່ນ ການຈັດຕັ້ງທີ່ຄະນະປະຈຳສະພາປະຊາຊົນທ້ອງຖິ່ນ ເປັນຜູ້ຕົກລົງສ້າງຕັ້ງ ແລະ ປະກາດເປັນທາງການ, ມີພາລະບົດບາດ ຈັດຕັ້ງປະຕິບັດແຜນການຂອງຄະນະກຳມະການເລືອກຕັ້ງລະດັບຊາດ ໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນທ້ອງຖິ່ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 112 (ປັບປຸງ)**

ຄະນະກຳມະການເລືອກຕັ້ງ ລະດັບຊາດ ແລະ ລະດັບທ້ອງຖິ່ນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ອາຍຸການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດນັ້ນ.

ອາຍຸການ ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນທ້ອງຖິ່ນຂັ້ນນັ້ນ.

ສຳລັບສິດ ແລະ ໜ້າທີ່ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ລະດັບທ້ອງຖິ່ນ ໄດ້ກຳນົດໄວ້ໃນກົດໝາຍ.

### ໝວດທີ XIII
### ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ

ອ່ານຕໍ່ໜ້າ 9

## ລັດຖະທຳມະນູນ...

(ຕໍ່ຈາກໜ້າ 8)

**ມາດຕາ 113**

ພາສາ, ອັກສອນ ລາວ ເປັນພາສາ ແລະ ອັກສອນ ທີ່ໃຊ້ເປັນທາງການ.

**ມາດຕາ 114**

ເຄື່ອງໝາຍຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຮູບວົງມົນ ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວເຟືອງ ແລະ ໂບສີແດງຂຽນອັກສອນ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຝື່ອງພະຈັນ ແລະ ໂບສີແດງຂຽນອັກສອນ "ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ" ລະຫວ່າງກາງ ຂອງສອງປາຍຮວງເຂົ້າມີຮູບທາດຫຼວງ, ຢູ່ກາງຮູບວົງມົນມີທີ່ທາງ, ທົ່ງນາ, ປ່າໄມ້ ແລະ ເຂື່ອນໄຟຟ້ານ້ຳຕົກ.

**ມາດຕາ 115**

ທຸງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນ ທຸງພື້ນສີຄາມ, ແຂບສີແດງ ແລະ ວົງເດືອນສີຂາວຢູ່ເຄິ່ງກາງຂອງທຸງຊາດ, ລວງກວ້າງຂອງທຸງເທົ່າກັບສອງສ່ວນສາມຂອງລວງຍາວ, ລວງກວ້າງຂອງແຂບສີແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງລວງກວ້າງແຂບສີຄາມ ແລະ ວົງເດືອນສີຂາວກວ້າງເທົ່າກັບ ສີ່ສ່ວນຫ້າ ຂອງລວງກວ້າງແຂບສີຄາມ.

**ມາດຕາ 116**

ເພງຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເພງທີ່ມີຊື່ວ່າ "ຊາດລາວ".

**ມາດຕາ 117**

ວັນຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນວັນທີ 2 ເດືອນທັນວາ ປີ 1975 ຊຶ່ງເປັນວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 118**

ສະກຸນເງິນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເງິນກີບ.

**ມາດຕາ 119**

ນະຄອນຫຼວງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນນະຄອນຫຼວງວຽງຈັນ.

**ໝວດທີ XIV**
**ບົດບັນຍັດສຸດທ້າຍ**

**ມາດຕາ 120 (ປັບປຸງ)**

ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ກົດໝາຍພື້ນຖານຂອງຊາດ.

ທຸກກົດໝາຍ ຕ້ອງໃຫ້ສອດຄ່ອງກັບລັດຖະທຳມະນູນ.

ລັດ ກຳນົດເອົາວັນທີ 15 ເດືອນສິງຫາ ປີ 1991 ເປັນວັນລັດຖະທຳມະນູນແຫ່ງຊາດ.

**ມາດຕາ 121**

ມີແຕ່ກອງປະຊຸມສະພາແຫ່ງຊາດເທົ່ານັ້ນ ຈຶ່ງມີສິດປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ລັດຖະທຳມະນູນ ຈະຖືກຮັບຮອງໄດ້ກໍຕໍ່ເມື່ອມີສະມາຊິກສະພາແຫ່ງຊາດ ຫຼາຍກວ່າ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ ເປັນຜູ້ລົງຄະແນນສຽງເຫັນດີ.

**ມາດຕາ 122 (ປັບປຸງ)**

ລັດຖະທຳມະນູນສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ເປັນຕົ້ນໄປ.

ລັດຖະທຳມະນູນສະບັບນີ້ ປ່ຽນແທນລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ເດືອນທັນວາ ປີ 2015.

**ປະທານສະພາແຫ່ງຊາດ**



**ປອ ໄຊສົມພອນ ພົມວິຫານ**




# ຜີບ້ານພ້ອມຜີປ່າ

**# ດົ້ນກີບເມກ**

ເມື່ອເວົ້າເຖິງປາກົດການຫຍໍ້ທໍ້ໃນສັງຄົມ ມັກຈະມີປາກົດການຫຼາກຫຼາຍຮູບການທີ່ແຊກຊ້ອນ ເປັນບັນຫາໃຫ້ອົງການຈັດຕັ້ງກ່ຽວຂ້ອງປວດຫົວຫຍຸ້ງຍາກໃນການຕັດສິນແກ້ໄຂບັນຫາ ເພາະບາງບັນຫາບໍ່ໄດ້ເກີດຈາກຜີປ່າຢ່າງດຽວ ແຕ່ມັນມີຜີບ້ານແອບແຝງຊ່ອຍເຫຼືອ, ຮ່ວມມືຮັບຜົນປະໂຫຍດ ພາສາຕະຫຼາດວ່າ: ສົ່ງທໍ່ນ້ຳລ້ຽງກັນ ເຊິ່ງບັນຫາແບບນີ້ ບໍ່ມີແຕ່ບ້ານເຮົາດອກ ເນື່ອງຈາກວ່າ ປະເທດອ້ອມຂ້າງກໍຍິ່ງຫຼາຍ ທີ່ຕົກລັກສະນະແບບນີ້. ບັນຫາຂອງບັນຫາທີ່ເອີ້ນວ່າ: ສີເທົາບໍ່ດຳບໍ່ຂາວ ຫຼື ສຳນວນບູຮານເອີ້ນວ່າ: ຜີມັກຈະປາກົດທີ່ມືດບໍ່ແຈ້ງ ເພື່ອປົດບັງອຳພາງ; ເລື່ອງກ່ຽວຂ້ອງກ່ຽວກັບຜີບ້ານພ້ອມຜີປ່ານີ້ ເກີດຂຶ້ນໄດ້ ເຫັນບາງໜ່ວຍງານ, ບາງອາຊີບ ທີ່ຖືກດູດດຶງ ໄປເປີດໄຟຂຽວໃຫ້ຜີປ່າໄດ້ລົງມືປະຕິບັດແຜນການບໍ່ດີຕໍ່ສັງຄົມ ເຊິ່ງມີທັງການຄ້າຂາຍສິນຄ້າ ຫຼື ການເຮັດທຸລະກິດບໍລິຫານ, ຢ່າລືມວ່າຜີປ່າເວລາເຂົ້າບ້ານ ກໍສະຫຼາດເຂົ້າຫາຊອກຫາຜີບ້ານໃຫ້ເປັນໃຈ ດ້ວຍການຊື້ຈ້າງຈອບອອຍ, ສ້າງຜົນປະໂຫຍດຮ່ວມກັນ ເຊິ່ງຜ່ານມາກໍມີຜູ້ເວົ້າຢືນຢັນວ່າ ບາງບັນຫາທີ່ເກີດຂຶ້ນກໍຍ້ອນມີຜີບ້ານພ້ອມຜີປ່າ!

ຊ່ອງວ່າງຂອງອາຊີບ, ລາຍໄດ້ບາງເທື່ອມັນບໍ່ພຽງພໍ ຫຼື ຂາດຄວາມສົມດຸນ ກໍແມ່ນສາເຫດໜຶ່ງທີ່ພາໃຫ້ຈິດໃຈ-ແນວຄິດຄົນເຮົາຜິດເຂວ ເພາະສະຖານະບີບຮັດ, ຄືດັ່ງທາງສຽງເວົ້າກັນວ່າ: "ໄຫໃຫຍ່ລົ້ນ ໄຫນ້ອຍບໍ່ເຕັມ" ຖ້າວ່າມັນເກີດຊ່ອງວ່າງລາຍໄດ້ ຫຼື ຄວາມບໍ່ສົມດຸນ ລະຫວ່າງ ເຫື່ອແຮງປະກອບອາຊີບ ກັບຄ່າຕອບແທນ ມັນກໍຈະເກີດໃຫ້ຄົນຄິດຫາຊ່ອງທາງສ້າງລາຍໄດ້ເພີ່ມ ແລ້ວເຮົາຈະແກ້ບັນຫາຢູ່ຂອດໃດ ໜ້າຄິດບໍ!

ຜູ້ຂຽນເຂົ້າໃຈວ່າ: ປາກົດການຫຍໍ້ທໍ້ໃນສັງຄົມນັ້ນ ບໍ່ພຽງແຕ່ຜີບ້ານພ້ອມຜີປ່າ ແຕ່ເກີດຈາກຜູ້ເຫັນກົງຈັກເປັນດອກບົວ ກໍມີຫຼາຍ!.




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

ດັ່ງນັ້ນ ສະເພາະການເບິ່ງພະນັກງານນີ້ບໍ່ຄວນເບິ່ງແຕ່ທາງໜ້າແຕ່ໃນເວລາດຽວແຕ່ໃນວຽກການອັນດຽວ, ຕ້ອງເບິ່ງໃຫ້ລັກໝົດທັງຂະບວນການວຽກງານຂອງພະນັກງານ ຈຶ່ງຈະເຫັນຄວາມລັກໄດ້, ຜູ້ໃດຫາກມັກອວດອ້າງວຽກການຂອງຕົນ, ມັກຖະແຫຼງ, ມັກຊອກເຮັດແຕ່ວຽກນ້ອຍໆເບົາໆ, ຕໍ່ໜ້າເຮັດຕາມຄຳສັ່ງ, ລັບຫຼັງມັກຜິດຖຽງກັບຜູ້ອື່ນ, ມັກຍົກຍໍຕົນເອງຂຶ້ນມັກຫຼີ້ນກິນເລີ່ນເຊີ່ນ, ຄົນເປັນແນວນັ້ນແມ່ນວ່າຈະເຮັດວຽກໄດ້ກໍບໍ່ແມ່ນພະນັກງານທີ່ດີ.

ຜູ້ໃດມີແຕ່ກົ້ມຫົວໃສ່ເຮັດວຽກ, ບໍ່ມັກອວດອ້າງ, ປາກເວົ້າຊື່ສັດ, ບໍ່ເຊື່ອງອຳຂໍ້ບົກພ່ອງຂອງຕົນ, ບໍ່ເລືອກວຽກງ່າຍ ຫຼື ຍາກ, ຍາມໃດກໍເດັດດ່ຽວເຮັດຕາມຄຳສັ່ງຂອງພັກ, ບໍ່ວ່າໃນສະພາບການໃດຈິດໃຈກໍບໍ່ປ່ຽນແປງ, ຄົນຜູ້ເປັນແນວນັ້ນແມ່ນວ່າວຽກການຈະຂາດຕົກບົກພ່ອງເລັກນ້ອຍກໍຍັງເປັນພະນັກງານທີ່ດີໄດ້. ຄົນໃນໂລກນີ້, ໃຜກໍມີບ່ອນດີ ແລະ ບ່ອນຊົ່ວຄືກັນໝົດ. ພວກເຮົາຕ້ອງຊ່ວຍເຊີດຊູບ່ອນດີ ແລະ ຊ່ວຍແກ້ໄຂບ່ອນຊົ່ວຂອງເຂົາເຈົ້າ.

ອ່ານຕໍ່ສະບັບໜ້າ...

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ເຂົ້າໃນສັນຍາວ່າດ້ວຍການສຳຫຼວດຫີນກຣານິດ, ຫີນມາໂບ ແລະແຮ່ຄົດພັນໃນເນື້ອທີ່200 ກິໂລຕາແມັດ ຢູ່ເມືອງກວັນ ແຂວງຫົວພັນ ຂອງບໍລິສັດ ລົງທຶນພັດທະນາ ແລະ ບໍ່ແຮ່ລາວ ຈຳກັດຜູ້ດຽວ; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 29/ລບ, ລົງວັນທີ5ມີນາ2015 ທີ່ສະເໜີຂໍຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນລັກສະນະຊົ່ວຄາວແລະລັກສະນະຖາວອນທີ່ນອນໃນປ່າສະຫງວນແຫ່ງຊາດດົງພູວຽງເພື່ອນຳໃຊ້ເຂົ້າໃນການພັດທະນາໂຄງການລົມ ສະຫວັນ 1 (ໄລຍະທີ 1) ຢູ່ເຂດບ້ານອາລານ, ບ້ານລະກາຍ, ບ້ານຊ້າງແທງ ແລະ ບ້ານແກ້ງອາເລີງເມືອງພິນແຂວງສະຫວັນນະເຂດ ຂອງບໍລິສັດ ສະຫວັນ 1 ວິນພາວເວີ ຈຳກັດ; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 19/ລບ, ລົງວັນທີ 25 ກຸມພາ 2025 ກ່ຽວກັບການສະເໜີຂໍພິຈາລະນາຮັບຮອງມູນຄ່າສະເໜີດັດແກ້ໂຄງການກໍ່ສ້າງເສັ້ນທາງບ້ານຈຽງ ເມືອງແມດ ແຂວງວຽງຈັນ ແລະ ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 14/ລບ, ລົງວັນທີ 17 ກຸມພາ2025ກ່ຽວກັບການສະເໜີຂໍດັດແກ້ມູນຄ່າໂຄງການກໍ່ສ້າງເສັ້ນທາງຍຸດທະສາດຫີນເຫີບ-ຊະນະຄາມແຂວງວຽງຈັນ; ລາຍງານຜົນການລົງເຄື່ອນໄຫວຕິດຕາມກວດກາການເຮັດກິດລອງທຸລະກຳຊຸບສິນດິຈິຕອນ ແລະການແລກປ່ຽນຊື້ຂາຍເງິນຄຣິບໂຕ ໃນ ສປປລາວ ສະບັບເລກທີ 289/ກສຕສ, ລົງວັນທີ 17 ຕຸລາ 2024; ລາຍງານກ່ຽວກັບການຄົ້ນຄວ້າ, ສ້າງຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາ; ລາຍງານຜົນສຳເລັດການເປັນເຈົ້າພາບຈັດກອງປະຊຸມກຳມາທິການວຽກງານລັດຖະສະພາຂອງສະມັດຊາລັດຖະສະພາຂອງບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF); ລາຍງານຜົນການຄົ້ນຄວ້າໜັງສືສະເໜີ ສະບັບເລກທີ 25/ລບ, ລົງວັນທີ 27 ກຸມພາ 2025 ກ່ຽວກັບການພິຈາລະນາຮັບຮອງການສະເໜີກຳນົດຂອບອາກອນອັດຕາຊົມໃຊ້ນ້ຳມັນເຊື້ອໄຟຕາມທີ່ກຳນົດໄວ້ໃນກົດໝາຍ; ລາຍງານການປັບປຸງລັດຖະບັນຍັດວ່າດ້ວຍການຄຸ້ມຄອງອາກອນເດັດຖານ ແລະ ຄ່າທຳນຽມສຳລັບທຸລະກິດຄາຊີໂນ; ລາຍງານຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ລາຍງານກ່ຽວກັບການກະກຽມກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີIX; ລາຍງານການຄົ້ນຄວ້າການສະເໜີແຕ່ງຕັ້ງບຸກຄະລາກອນຂອງສານປະຊາຊົນສູງສຸດ; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 24/ລບ, ລົງວັນທີ 27 ກຸມພາ 2025 ກ່ຽວກັບການສະເໜີຂໍພິຈາລະນາຮັບຮອງແລະຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການເຂື່ອນໄຟຟ້ານ້ຳໄມ້2ເມືອງໝອກ ແຂວງຊຽງຂວາງແລະລາຍງານຄວາມຄືບໜ້າຜົນການຄົ້ນຄວ້ານະໂຍບາຍສົ່ງເສີມພິເສດໃນການພັດທະນານິຄົມອຸດສາຫະກຳ.

ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດແລະນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະວົງ)**

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານປອ. ນາງສູນທອນ ໄຊຍະຈັກໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ແລະອຸປະຖຳໃນຄັ້ງນີ້.



## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ທານສະພາແຫ່ງຊາດ ໄດ້ເຂົ້າວາງພວງມາລາໄວ້ອາໄລເຖິງດວງວິນຍານຂອງສະຫາຍ ພົນເອກ ຄຳໄຕ ສີພັນດອນ ອະດີດປະທານຄະນະບໍລິຫານງານສູນກາງພັກ, ອະດີດປະທານປະເທດແລະນັກປະຕິວັດອາວຸໂສຂອງພັກປະຊາຊົນປະຕິວັດລາວ.

ສະຫາຍປອ. ໄຊສົມພອນ ພົມວິຫານ ໄດ້ຂຽນ ແລະ ເຊັນຄຳໄວ້ອາໄລເຖິງດວງວິນຍານຂອງສະຫາຍ ພົນເອກ ຄຳໄຕ ສີພັນດອນ ເຊິ່ງມີເນື້ອໃນວ່າ: ຄະນະປະຈຳສະພາແຫ່ງຊາດ ຂໍສະແດງຄວາມເສົ້າໂສກອາໄລອາວອນຢ່າງສຸດຊຶ້ງ ຕໍ່ການຈາກໄປໂດຍບໍ່ມີວັນກັບຄືນມາຂອງສະຫາຍ ພົນເອກ ຄຳໄຕ ສີພັນດອນ ອະດີດປະທານຄະນະບໍລິຫານງານສູນກາງພັກ, ອະດີດປະທານປະເທດ ແຫ່ງ ສປປລາວ, ນັກປະຕິວັດອາວຸໂສຂອງພັກປະຊາຊົນປະຕິວັດລາວ.

ການຈາກໄປຂອງສະຫາຍໃນຄັ້ງນີ້ ເປັນການສູນເສຍອັນຍິ່ງໃຫຍ່ຂອງພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ, ສູນເສຍການນຳຂັ້ນສູງຮຸ່ນທຳອິດຂອງການປະຕິວັດລາວ, ສະຫາຍເປັນນັກປະຕິວັດຜູ້ອົງອາດກ້າຫານ ຜູ້ທີ່ໄດ້ອຸທິດເຫື່ອແຮງ, ສະຕິປັນຍາຂອງຕົນ ເພື່ອພາລະກິດປົດປ່ອຍຊາດໃນເມື່ອກ່ອນແລະພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ, ເປັນຜູ້ສືບຕໍ່ນຳພາການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກເຮົາ; ສະຫາຍແມ່ນນັກຮັກຊາດທີ່ດູດດື່ມ, ແມ່ນນັກປະຕິວັດທີ່ກ້າແກ່ນແລະຜູ້ນຳທີ່ດີເດັ່ນຂອງພັກ, ຂອງຊາດເຮົາ.

ຄະນະປະຈຳສະພາແຫ່ງຊາດ ຂໍຈາລຶກຄຸນງາມຄວາມດີຂອງສະຫາຍຕະຫຼອດໄປ ແລະ ຈະສືບຕໍ່ພາລະກິດຂອງສະຫາຍເພື່ອສ້າງສາປະເທດຊາດລາວໃຫ້ຮັ່ງມີ, ເຂັ້ມແຂງ.

ຂໍໃຫ້ດວງວິນຍານຂອງສະຫາຍ ພົນເອກ ຄຳໄຕ ສີພັນດອນ ຈົ່ງໄປສູ່ສຸຂະຕິດ້ວຍເທີ້ນ.

**(ສອນສັກ ວັນວິໄຊ)**

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

(ສພຊ)-ວັນທີ 3-4 ເມສານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາປະທານ ແລະ ຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີກະຊວງພາຍໃນ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ໄດ້ກ່າວວ່າ: ການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 18 ມີນາ 2025 ເຊິ່ງກວມເອົາ 27 ມາດຕາ, 102 ເນື້ອໃນ ແລະ ໃນຕອນເຊົ້າຂອງວັນທີ 20 ມີນາ 2025 ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ໄດ້ຜ່ານການຮັບຮອງເອົາໂດຍການເຫັນດີ 148 ທ່ານ ເທົ່າກັບ 97.36%; ຫຼັງຈາກນັ້ນ, ບັນດາກົມທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໄດ້ປະສານສົມທົບກັບກະຊວງພາຍໃນ ເພື່ອຈັດກອງປະຊຸມຄົ້ນຄວ້າຕໍ່ບັນດາຄຳເຫັນຂອງ ສສຊ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອຮັບຟັງການລາຍງານຂອງຄະນະວິຊາການທີ່ໄດ້ຄົ້ນຄວ້າບັນດາຄຳເຫັນຂອງສສຊແລະເລືອກເຟັ້ນເອົາຄຳເຫັນທີ່ມີເຫດມີຜົນປັບປຸງໃສ່ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ບັນດາຄຳເຫັນນັ້ນ ໄດ້ຮັບການຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງ ເພື່ອເຮັດໃຫ້ກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ຮັດກຸມ ເມື່ອປະກາດໃຊ້ແລ້ວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດຜົນ.

**(ນາງ ອາລິນ ສຸພົມມະປະກິດ)**

ວາດ ກະວີລາວ

# ປີໃໝ່ໄຊຊະນະໃໝ່

**# ກຸຫຼາບເມືອງໃຕ້**

❊ ວັນເວລາເຄື່ອນຍ້າຍ
ເດືອນເມສາສົງການ
ຄົນລາວເໜືອກາງໃຕ້
ປວງປະຊາໃຫຍ່ນ້ອຍ

ເລີຍລ່ວງມາເຖິງ
ຊື່ນບານເຫຼືອລົ້ນ
ກຽມໃຈລໍປີໃໝ່
ຄອຍຖ້າຮ່ວມງານ

❊ ລັດຖະການກໍ່ຜ່ອນ
ມີມາໄລດວງຫອມ
ບາສີສູ່ຂວັນເອີ້ນ
ວັນປີໃໝ່ຮອດມື້

ຍໍຍື່ນພອນໄຊ
ດອກຄູນປະດັບເອ້
ມັດແຂນເອົາໂຊກໃຫຍ່
ຫົດລ້າງຕໍ່ກັນ ນັ້ນນາ!

❊ ວາລະດີປີໃໝ່ນີ້
ໂພຍໄພໜີລາໄກ
ຄວາມໝິ່ນໝອງເຄີຍເສົ້າ
ປີໃໝ່ນຳພອນໄຊສິ່ງໃຫ້

ຂໍຈົ່ງສຸກຂີ
ຢ່າມີມາຕ້ອງ
ຫາຍໄປນຳປີເກົ່າ ພຸ້ນທ້ອນ!
ຊຸມເຈົ້າຈົ່ງສະບາຍ

❊ ກາຍ ແລະ ໃຈທ່ານນັ້ນ
ມີຄວາມສຸກສົດໃສ
ຫວັງທຸກແນວຂໍໃຫ້
ສີວິໄລຮຸ່ງກ້າວ

ໂລຄາຫ່າງຫາຍໜີ
ດັ່ງດຽວໂດຍແກ້ວ
ປະສົບໄຊໂຊກໃຫຍ່
ມີໄຊກ້າແກ່ນແຂງ

❊ ສົມກັບຄວາມມາດແມ້ງ
ສຸກສຳລານມະໂນໃນ
ປີໃໝ່ລາວມາເຖິງນີ້
ຂໍໃຫ້ລວຍລາບລົ້ນ

ຈິດຊື່ນໃຈບານ
ຮຸ່ງໃສຈະເລີນກ້າວ
ຊີວິດສຸກສົດຊື່ນ
ຕາມໃຈຕັ້ງຕໍ່ປະສົງ

❊ ປີໃໝ່ຈົ່ງພົບພໍ້
ສຸຂະພາບແຂງແຮງ
ເປັນຜູ້ມີໄຊກ້າ
ໄຊຊະນະຍາດໄດ້

ຜົນສຳເລັດຕາມແຜນ
ໂຣກໄພໄກເວັ້ນ
ລາສີງາມສະຫງ່າ
ໃນມື້ໃໝ່ແຫ່ງປີ ທ່ານເອີຍ!



## ຜັກຫວາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທຽນ**

❊ **ເບື່ອງ**ໃນໂອກາດ ປີເກົ່າ **(ມະໂລງ)** ຫຍັບຍ່າງຍ້າຍ ປີ **(ມະເສັງ)** ໃໝ່ວຽນມາ ຊ່າວ່າບ່າພອນໄຊ ເພັດພອຍມາຕ້ອນ ຫາບຄອນເງິນຄ່ຳແກ້ວ ມາຝາກຄົນທີ່ພອນອ່ານ ຈົ່ງສຸຂີລົ້ນບ້ານ ລອຍລົ້ນຕະຫຼອດໄປ ສ່ອນຜູ້ໃດຫາກ່ມາເປີດພໍ້ ກໍ່ໂດຍດັ່ງດຽວກັນ ຂໍໃຫ້ເງິນຄ່ຳໄຫຼ ຫຼັ່ງມາໂຮມເຕົ້າ ຢ່າໄດ້ຈົນໝອງເສົ້າ ແຝນຄ່ຳເຮົາທຸກທົບແຫ່ງຈ່າຍຢ່າບົກຈົກຢ່າແຫ້ງ ເງິນຄ່ຳລົ້ນອັ່ງຄັ່ງ **ທຸກທ່ານເບີ!**

❊ **ຂົມເຊີຍ** 14 ເມສາ **ວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ** ທີ່ຈະໄດ້ຕ່າວໝູນ ວຽນມາບັນຈົບຄົບຮອບ **70 ປີ** ຂໍຝາກເອທີນີ້ຍື່ນຕ້ອນ ພອນໄຊສົ່ງໄປຫາຊາວໜຸ່ມລາວທົ່ວສາທາ ທຸກພາກເໜືອ-ກາງ-ໃຕ້ ຂໍໃຫ້ມີສຸກລົ້ນ ກາຍໃຈໂດຍດັ່ງ ທັງວຽກງານເດັ່ນກ້າວ ຈະເລີນຂຶ້ນລື່ນກວ່າຫຼັງ **ທ່ານເອີຍ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຢ່າຊີຮຽດ

ມີຊາຍໜຸ່ມຄົນໜຶ່ງຢ່າງຊຶງລັງດ້ອຍໜ້າຕາຊີຮຽດ, ບໍ່ປາກບໍ່ເວົ້າຫຍັງ ເຂົ້າໄປໃນຮ້ານເຫຼົ້າຮ້ານປະຈຳ; ຈາກນັ້ນ, ກໍ່ສັ່ງພະນັກງານວ່າ:

**ຊາຍໜຸ່ມ:** ເອົາເຫຼົ້າມາໃຫ້ແດ່ແກ້ວໜຶ່ງ ເອົາແບບດີກຼີແຮງທີ່ສຸດທີ່ຮ້ານມີມາເລີຍ

**ພະນັກງານ:** ໄດ້ໆ... ວ່າແຕ່ອ້າຍເປັນຫຍັງມາ ຄືຊີຮຽດແທ້?

**ຊາຍໜຸ່ມ:** ດຽວກັບເມຍ... ຄືກລົງໂຫດບໍ່ໃຫ້ເຂົ້າເຮືອນໜຶ່ງອາທິດ

**ພະນັກງານ:** ບໍ່ເປັນຫຍັງດອກອ້າຍ ເຮັດລືມໆໄປ... ອາທິດດຽວຊື່ໆ ບຶດດຽວກະຄົບ

**ຊາຍໜຸ່ມ:** ບໍ່ແມ່ນຈັ່ງຊັ້ນ, ທີ່ເຄັ່ງຕຶງຢູ່ນີ້ ເພາະມື້ນີ້ເປັນມື້ສຸດທ້າຍແລ້ວ



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຄັນໄດ້ຟັງຄ່າເວົ້າ
ລາງເທື່ອຂົມຂື່ເພ້ຍ

ຂົມໃບໆຢ່າຟ້າວຈົ່ມ
ເມື່ອໜ້າຫາກຊີດີ

## ສະພາອິນໂດເນເຊຍ ປັບປຸງກົດໝາຍ ຂະຫຍາຍບົດບາດທະຫານໃນລັດຖະບານ



(AFP) - ວັນພະຫັດທີ 20 ມີນາຜ່ານມາ, ສະພາຜູ້ແທນປະຊາຊົນອິນໂດເນເຊຍ ໄດ້ປັບປຸງກົດໝາຍ ເພື່ອເປີດທາງໃຫ້ແກ່ການຂະຫຍາຍຂອບເຂດອຳນາດຂອງກອງທັບ ນອກເໜືອຈາກພາລະກິດດ້ານຄວາມໝັ້ນຄົງ ໂດຍລວມເຖິງການອະນຸຍາດໃຫ້ທະຫານສາມາດດຳລົງຕຳແໜ່ງທາງການເມືອງໄດ້ຫຼາຍຂຶ້ນ.

ຂະນະທີ່ ພົອ. ອາກຸສ ຊູບີຢັນໂຕ (Agus Subiyanto) ຜູ້ບັນຊາການກອງທັບແຫ່ງຊາດອິນໂດເນເຊຍ (ຜູ້ບັນຊາການທະຫານສູງສຸດ) ກ່າວເຖິງກົດໝາຍດັ່ງກ່າວທີ່ມີຊື່ວ່າ "ກົດໝາຍການທະຫານ" ເຊິ່ງປະກາດໃຊ້ຄັ້ງທຳອິດໃນປີ 2004 ນັ້ນ ແມ່ນ "ຫຼ້າສະໄໝ" ແລະ ຄວນໄດ້ຮັບການປັບປຸງ.

ກົດໝາຍສະບັບປັບປຸງໃໝ່ ຈະອະນຸຍາດໃຫ້ທະຫານສາມາດດຳລົງຕຳແໜ່ງໃນອົງການຂອງລັດຖະບານ 14 ອົງການ ໃນນັ້ນມີກະຊວງປ້ອງກັນປະເທດ, ອົງການໄອຍະການສູງສຸດ ແລະ ສຳນັກງານແກ້ໄຂໄພພິບັດແຫ່ງຊາດ ຈາກເດີມ 10 ອົງການ ໂດຍມີເງື່ອນໄຂເດີມຄື: ທະຫານນາຍນັ້ນ ຕ້ອງລາອອກຈາກອົງການເດີມ ຫຼື ກະສຽນຈາກການຮັບໃຊ້ກອງທັບ.

ພົທ. ປຣາໂບໂວ ສຸບຽນໂຕ (Prabowo Subianto) ປະທານາທິບໍດີອິນໂດເນເຊຍກ່າວວ່າ: ແນ່ນອນວ່າສະໜັບສະໜູນການປັບປຸງເນື້ອໃນຂອງກົດໝາຍ ເຖິງແມ່ນປະເຊີນກັບຄວາມສ່ຽງທີ່ຈະເກີດການປະທ້ວງຕໍ່ຕ້ານຂະໜາດໃຫຍ່ ຈາກປະຊາຊົນຈຳນວນຫຼາຍ ໂດຍສະເພາະແມ່ນນັກສຶກສາ.

## ລັດຖະສະພາໂຮນລັງ ຮຽກຮ້ອງໃຫ້ຫຼຸດການ ເອື່ອຍອີງຍັກໃຫຍ່ດ້ານເຕັກໂນໂລຊີຂອງສະຫະລັດ



(Xinhua) - ເມື່ອວັນອັງຄານທີ 18 ມີນາຜ່ານມາ, ລັດຖະສະພາໂຮນລັງ ໄດ້ຮັບຮອງເອົາມະຕິຫຼາຍສະບັບ ໂດຍຮຽກຮ້ອງໃຫ້ລັດຖະບານຫຼຸດຜ່ອນການເພິ່ງພາບັນດາບໍລິສັດເຕັກໂນໂລຊີຍັກໃຫຍ່ຂອງສະຫະລັດອາເມລິກາ.

ຕາມມະຕິທີ່ເຜີຍແຜ່ເທິງເວັບໄຊຂອງສະພາຜູ້ແທນປະຊາຊົນ, ລັດຖະສະພາໄດ້ຮຽກຮ້ອງໃຫ້ລັດຖະບານ ຢຸດການເຄື່ອນຍ້າຍເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຂອງລັດຖະບານໂດຍບໍ່ຈຳເປັນ ໄປສູ່ການບໍລິການຄລາວ (cloud) ທີ່ເປັນເຈົ້າຂອງໂດຍບໍລິສັດເຕັກໂນໂລຊີຍັກໃຫຍ່ຂອງອາເມລິກາ; ລັດຖະສະພາຮັບຮູ້ດີວ່າ ການເພິ່ງພາບໍລິສັດເຕັກໂນໂລຊີຍັກໃຫຍ່ຂອງອາເມລິກາໂດຍສົມເຊິ່ງນັ້ນ ເປັນໄພຂົ່ມຂູ່ຕໍ່ຄວາມເປັນເອກະລາດແລະຄວາມປອດໄພທາງອິນເຕີເນັດຂອງປະເທດ.

ລັດຖະສະພາຍັງໄດ້ຮຽກຮ້ອງໃຫ້ລັດຖະບານເປີດການປະມູນເພື່ອສ້າງຕັ້ງເວທີການບໍລິການ cloud ແຫ່ງຊາດ ເຊິ່ງຄຸ້ມຄອງໂດຍໂຮນລັງທັງໝົດ ເພື່ອເຮັດໃຫ້ການສື່ສານ ແລະ ການເກັບຮັກສາຂໍ້ມູນລະຫວ່າງອົງການຕ່າງໆ ມີຄວາມປອດໄພ.

ມະຕິສະບັບໜຶ່ງ ຮຽກຮ້ອງໃຫ້ລັດຖະບານຈັດທຳການວິເຄາະຄວາມສ່ຽງ ແລະ ຍຸດທະສາດໃນການອອກຈາກບໍລິການ cloud ທັງໝົດ ທີ່ຊື້ຈາກບໍລິສັດເຕັກໂນໂລຊີຍັກໃຫຍ່ຂອງອາເມລິກາໃນປັດຈຸບັນ.

ມະຕິອີກສະບັບ ຮຽກຮ້ອງໃຫ້ເລັ່ງລົງທຶນໃນທາງເລືອກດ້ານ cloud ພາຍໃນສະຫະພາບເອີຣົບ (EU) ເຊິ່ງເນັ້ນໜັກເຖິງຄວາມຈຳເປັນຂອງເອີຣົບ ໃນການບໍລິຫານຍຸດທະສາດດິຈິຕອນດ້ວຍຕົນເອງ ທ່າມກາງຄວາມບໍ່ແນ່ນອນທາງພູມສາດການເມືອງ, ໂດຍລະບຸວ່າ "ເມື່ອພິຈາລະນາວ່າສະຖານະການທາງພູມສາດການເມືອງ ກຳລັງກາຍເປັນເລື່ອງທີ່ຄາດເດົາໄດ້ຍາກຍິ່ງຂຶ້ນ ແລະ ປະທານາທິບໍດີຂອງອາເມລິກາ ສາມາດໃຊ້ມາດຕະການທີ່ຂົ່ມຂູ່ການເຂົ້າເຖິງ ຫຼື ຄວາມປອດໄພຂອງຂໍ້ມູນເອີຣົບໃນສະພາບແວດລ້ອມ cloud ຂອງອາເມລິກາ ໄດ້ໂດຍການອອກຄຳສັ່ງ ແລະ ກົດໝາຍ... ລັດຖະສະພາ ຈຶ່ງຮຽກຮ້ອງໃຫ້ລັດຖະບານສະໜັບສະໜູນພາຍໃນ EU ໃຫ້ເລັ່ງລົງທຶນໃນທາງເລືອກດ້ານ cloud ຂອງເອີຣົບ ແລະ ພື້ນຖານໂຄງລ່າງດິຈິຕອນ."

ມະຕິອີກສະບັບໜຶ່ງລະບຸວ່າ: "ແນວທາງປັດຈຸບັນຂອງສະຫະລັດ ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ໂຮນລັງ ແລະ ເອີຣົບ ຕ້ອງຢືນຢູ່ດ້ວຍຕົນເອງໃນຂົງເຂດພະລັງງານ, ປ້ອງກັນປະເທດ ແລະ ພື້ນຖານໂຄງລ່າງດ້ານ ICT" ໂດຍຮຽກຮ້ອງໃຫ້ລັດຖະບານໂຮນລັງ ໃຫ້ບຸລິມະສິດແກ່ບໍລິສັດເອີຣົບໃນການປະມູນສຳລັບການບໍລິການ ICT ທີ່ສຳຄັນ.

## ສິງກະໂປເປີດໃຫ້ປະຊາຊົນກວດກາທະບຽນຜູ້ມີສິດເລືອກຕັ້ງ ແລະ ເພີ່ມວົງເງິນລາຍຈ່າຍໃນການເລືອກຕັ້ງ




(Xinhua) - ກົມການເລືອກຕັ້ງຂອງສິງກະໂປ (Elections Department - ELD) ປະກາດເມື່ອວັນຈັນທີ 24 ມີນາຜ່ານມາວ່າທະບຽນຜູ້ມີສິດເລືອກຕັ້ງທີ່ຜ່ານການຮັບຮອງ ເປີດໃຫ້ປະຊາຊົນກວດກາໄດ້ຕັ້ງແຕ່ວັນທີ 25 ມີນາເປັນຕົ້ນໄປ ຫຼັງຈາກການກວດກາເບື້ອງຕົ້ນທີ່ດຳເນີນໃນເດືອນກຸມພາ; ທະບຽນດັ່ງກ່າວ ທີ່ມີລາຍຊື່ຜູ້ມີສິດເລືອກຕັ້ງທັງໝົດ 2,758,095 ຄົນ ໄດ້ຖືກປັບປຸງ ແລະ ເປີດເຜີຍຕໍ່ສາທາລະນະເປັນຄັ້ງທຳອິດໃນເດືອນກຸມພາຜ່ານມາ ເຊິ່ງເປັນສ່ວນໜຶ່ງຂອງຂະບວນການມາດຕະຖານກ່ອນການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນເດືອນພະຈິກ 2025, ປັດຈຸບັນ ທະບຽນດັ່ງກ່າວໄດ້ເປີດໃຫ້ປະຊາຊົນກວດກາເປັນຄັ້ງທີສອງ.

ELD ກ່າວວ່າ ທະບຽນທີ່ຜ່ານການຮັບຮອງນັ້ນໄດ້ຖືກລວບລວມໂດຍອີງໃສ່ເຂດເລືອກຕັ້ງໃນວັນທີ 1 ກຸມພາ; ແນວໃດກໍຕາມ, ວັນທີ 11 ມີນາຜ່ານມາ, ສິງກະໂປໄດ້ປັບປຸງເຂດເລືອກຕັ້ງຕາມຄຳແນະນຳຂອງຄະນະກຳມະການກວດກາຄືນເຂດເລືອກຕັ້ງ ເຊິ່ງສະທ້ອນໃຫ້ເຫັນເຖິງການປ່ຽນແປງຂອງປະຊາກອນແລະການພັດທະນາທີ່ຢູ່ອາໄສໃໝ່.

ກົມດັ່ງກ່າວ ພວມກະກຽມທະບຽນແບບປະສົມໂດຍດັດແກ້ເຂດເລືອກຕັ້ງໃຫ້ສອດຄ່ອງກັບເຂດເລືອກຕັ້ງໃໝ່, ແນະນຳໃຫ້ຜູ້ມີສິດເລືອກຕັ້ງ ລໍຖ້າການປັບປຸງເພີ່ມຕື່ມກ່ອນກັບການເຜີຍແຜ່ທະບຽນແບບປະສົມເທົ່ານັ້ນກ່ອນທີ່ຈະກວດເບິ່ງລາຍລະອຽດຂອງຜູ້ມີສິດເລືອກຕັ້ງຂອງຕົນ.

ວັນພະຫັດທີ 27 ມີນາ, ກົມການເລືອກຕັ້ງ ປະກາດໃນຖະແຫຼງການວ່າ ໄດ້ປັບເພີ່ມວົງເງິນໃຊ້ຈ່າຍສູງສຸດສຳລັບລາຍຈ່າຍໃນການເລືອກຕັ້ງເພື່ອຮອງຮັບເງິນເຟີ້.

ພາຍໃຕ້ກົດລະບຽບສະບັບປັບປຸງ, ຈຳນວນເງິນສູງສຸດທີ່ຜູ້ສະໝັກສາມາດໃຊ້ຈ່າຍຕໍ່ຜູ້ມີສິດເລືອກຕັ້ງ ໄດ້ເພີ່ມຂຶ້ນຈາກ 4 ໂດລາສິງກະໂປ (ປະມານ 3 ໂດລາສະຫະລັດ) ເປັນ 5 ໂດລາສິງກະໂປ ເຊິ່ງຖືເປັນການປັບຄັ້ງທຳອິດນັບແຕ່ປີ 2015.

ລະບົບການເລືອກຕັ້ງຂອງສິງກະໂປປະກອບດ້ວຍການເລືອກຕັ້ງແບບສະມາຊິກລັດຖະສະພາຄົນດຽວ (Single Member Constituencies - SMCs) ແລະ ການເລືອກຕັ້ງແບບກຸ່ມ (Group Representation Constituencies - GRCs); ໃນລະບົບການເລືອກຕັ້ງແບບສະມາຊິກລັດຖະສະພາຄົນດຽວ ເປັນຕົວແທນຂອງແຕ່ລະເຂດ, ວົງເງິນໃຊ້ຈ່າຍຂອງຜູ້ສະໝັກ ແມ່ນ 5 ໂດລາສິງກະໂປ ຄູນດ້ວຍຈຳນວນຜູ້ມີສິດເລືອກຕັ້ງໃນເຂດເລືອກຕັ້ງນັ້ນ.

ສຳລັບ GRC ເຊິ່ງເປັນເຂດເລືອກຕັ້ງຂະໜາດໃຫຍ່ທີ່ມີສະມາຊິກລັດຖະສະພາຫຼາຍຄົນເປັນຕົວແທນ, ວົງເງິນໃຊ້ຈ່າຍຈະໃຊ້ກັບທີມທັງໝົດທີ່ລົງແຂ່ງຂັນເປັນກຸ່ມ; ການໃຊ້ຈ່າຍທັງໝົດທີ່ອະນຸຍາດສຳລັບ GRC ແມ່ນ 5 ໂດລາສິງກະໂປ ຕໍ່ຜູ້ມີສິດເລືອກຕັ້ງ 1 ຄົນ ໂດຍແບ່ງໃຫ້ເທົ່າທຽມກັນລະຫວ່າງຜູ້ສະໝັກທຸກຄົນໃນກຸ່ມ.

ELD ກ່າວວ່າ ຂໍ້ຈຳກັດເຫຼົ່ານີ້ ຈະຊ່ວຍຮັບປະກັນການແຂ່ງຂັນທີ່ເທົ່າທຽມກັນ ແລະ ປ້ອງກັນ "ການເມືອງທີ່ກ່ຽວຂ້ອງກັບເງິນ" ພ້ອມກັນນັ້ນ, ການເກີນຂີດຈຳກັດແມ່ນຜິດກົດໝາຍ.

(1 ໂດລາສິງກະໂປ ເທົ່າກັບ 0.75 ໂດລາສະຫະລັດ).

## Julia Kloeckner ໄດ້ຮັບເລືອກຕັ້ງເປັນປະທານ Bundestag



(Xinhua) - ເມື່ອວັນອັງຄານທີ 25 ມີນາຜ່ານມາ, ຈູເລຍ ໂຄລເອັກເນີ ຈາກສະຫະພາບຄຣິສຕຽນປະຊາທິປະໄຕ (CDU) ໄດ້ຮັບເລືອກຕັ້ງເປັນປະທານບຸນເດສທາກ ຫຼື ສະພາຕ່ຳຂອງລັດຖະສະພາເຢຍລະມັນຜູ້ໃໝ່ ໃນກອງປະຊຸມຄັ້ງປະຖົມມະລືກຂອງສະພາຕ່ຳ ຊຸດທີ XXI ຫຼັງຈາກການເລືອກຕັ້ງເມື່ອເດືອນກຸມພາ.

ໂຄລເອັກເນີ ເກີດໃນປີ 1972 ແລະເປັນສະມາຊິກສະພາຕ່ຳ ຕັ້ງແຕ່ປີ 2002 ເຖິງ 2011; ນາງເຄີຍເປັນຮອງລັດຖະມົນຕີຂອງກະຊວງອາຫານ, ກະສິກຳ ແລະ ການປົກປ້ອງຜູ້ບໍລິໂພກຂອງລັດຖະບານກາງ ຕັ້ງແຕ່ປີ 2009 ເຖິງ 2011. ນອກຈາກນີ້, ນາງຍັງເຄີຍເປັນລັດຖະມົນຕີກະຊວງອາຫານແລະກະສິກຳ ຕັ້ງແຕ່ປີ 2018 ເຖິງ 2021 ແລະ ເປັນສະມາຊິກສະພາຕ່ຳອີກຄັ້ງ ຕັ້ງແຕ່ປີ 2021.

## ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ເລື່ອງທີ່ໜ້າສົນໃຈ ຈາກຕ່າງແດນ

ສຳລັບບັນດານັກລ່າຂ່າວຕ່າງປະເທດສ່ວນຫຼາຍ ຄົງຈະເປັນເອກະພາບກັບຜູ້ຂຽນວ່າ ຂ່າວຈາກປະເທດສິງກະໂປນັ້ນລ້ວນແຕ່ໃຫ້ສາລະປະໂຫຍດເປັນບົດຮຽນດ້ານໃດດ້ານໜຶ່ງໃຫ້ພວກເຮົາໄດ້ຮຽນຮູ້ ເພາະເປັນເລື່ອງລາວກ່ຽວກັບມາດຕະຖານທາງດ້ານກົດໝາຍ ທີ່ເພື່ອຄຸ້ມຄອງລັດ-ຄຸ້ມຄອງສັງຄົມ. ໃນລະຫວ່າງຫຼັງໆມານີ້ ຂ່າວສ່ວນໃຫຍ່ຈະມາຈາກສິງກະໂປ ແມ່ນເລື່ອງປາບປາມພວກຕົ້ມຕຸ໋ນທາງອອນລາຍທີ່ອາລະວາດແຮງຢູ່ໃນປະເທດນີ້, ເລື່ອງນີ້ຄົງບໍ່ແປກດອກ ເພາະສິງກະໂປເປັນໜຶ່ງໃນສູນການເງິນຂອງໂລກ, ເປັນປະເທດທີ່ຮັ່ງມີສີສຸກລະດັບຫົວແຖວຂອງໂລກເຊັ່ນກັນ; ນອກຈາກນັ້ນ, ກໍເປັນຂ່າວເລື່ອງຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເລື່ອງນະວັດຕະກຳທີ່ກ້າວໜ້າທັນສະໄໝ ເພື່ອຜົນປະໂຫຍດ ແລະ ຄວາມຜາສຸກໃນສັງຄົມ ພິເສດທີ່ສຸດແມ່ນເລື່ອງຕ້ານການສໍ້ລາດບັງຫຼວງ, ເລື່ອງປະຢັດມັດທະຍັດແລະການປົກປັກຮັກສາສິ່ງແວດລ້ອມ. ສິງກະໂປ ມີພື້ນທີ່ດິນເອາະເຢາະ ແຕ່ມີທຸກຢ່າງທີ່ຫຼາຍປະເທດແຜ່ນດິນໃຫຍ່ໆບໍ່ມີ, ນີ້ກໍຍ້ອນຫົວຄິດປະດິດສ້າງ ແລະ ຄວາມເກັ່ງກ້າສາມາດຂອງຜູ້ນຳທີ່ເນັ້ນການສ້າງຄົນທີ່ມີຄຸນນະພາບເປັນວຽກບຸລິມະສິດ.

ຫວ່າງແລ້ວນີ້ກໍມີ 2 ຂ່າວອອກມາຈາກສິງກະໂປ ທີ່ຜ່ານການພິມເຜີຍແຜ່ໃນໜ້າໜັງສືພິມລາວພວກເຮົາແລ້ວ ແຕ່ຂໍທົບທວນຄືນແບບສັງລວມໃນບົດນີ້ຄື: ໜຶ່ງແມ່ນຂ່າວກ່ຽວກັບແຜນເພີ່ມເສັ້ນທາງລົດຖີບຕື່ມອີກ 10 ສາຍ ເຊິ່ງເມື່ອບວກກັບເສັ້ນທາງລົດຖີບທີ່ມີແລ້ວ ກໍພຽງພໍທີ່ຈະເຮັດໃຫ້ທຸກໆຄຸ້ມໃນສິງກະໂປມີເສັ້ນທາງສຳລັບຄົນຍ່າງ ແລະລົດຖີບຢ່າງໜ້ອຍ 1 ເສັ້ນ (ໃນແຕ່ລະຄຸ້ມ) ພາຍໃນປີ 2030; ທາງລົດຖີບນີ້ ບາງສາຍສ້າງເປັນອັນສະເພາະ, ບາງສາຍຈາກການຂະຫຍາຍທາງລົດທີ່ມີແລ້ວ ເພື່ອສະຫງວນໄວ້ໃຫ້ຄົນຍ່າງ ແລະ ພວກໃຊ້ລົດຖີບ. ວ່າກັນວ່າໃນຕໍ່ໜ້າຊາວສິງກະໂປ ທີ່ເຄື່ອນໄຫວໄປມາໃນໄລຍະປະມານ 5 ກິໂລແມັດຈາກເຮືອນກໍຄົງຈະເລືອກໃຊ້ຕີນຍ່າງ ຫຼື ຂີ່ລົດຖີບເປັນສ່ວນຫຼາຍ, ທາງທີ່ກຳນົດໃຫ້ສະເພາະຄົນຍ່າງກັບຂີ່ລົດຖີບນີ້ ແມ່ນນອນຢູ່ໃນໂຄງການ "ຖະໜົນທີ່ເປັນມິດ" (Friendly Streets) ແລະ ກຳນົດສ້າງຢູ່ໃນເຂດຊຸມຊົນໃກ້ໆຕະຫຼາດ, ໂຮງໝໍ, ສະຖານີລົດໄຟໃຕ້ດິນ, ໂຮງຮຽນ, ບ່ອນອອກກຳລັງກາຍ, ສູນອາຫານ ແລະ ອື່ນໆ; ຊຸມຊົນແບບນີ້ ສ່ວນໃຫຍ່ແມ່ນບ່ອນຢູ່ອູ່ນອນຂອງຄົນອາຍຸສູງ, ເດັກນ້ອຍ ແລະ ຄອບຄົວຄູ່ຜົວເມຍໜຸ່ມ.

ເມື່ອເວົ້າຮອດທາງຄົນຍ່າງກັບທາງລົດຖີບໃນສິງກະໂປແລ້ວ ຫຼາຍຄົນຄົງອາດຕັ້ງຄຳຖາມວ່າ ປະເທດສິງກະໂປ ຮັ່ງມີ ເປັນຫຍັງຈຶ່ງສົ່ງເສີມການຍ່າງກັບຂີ່ລົດຖີບ, ຄຳຕອບກໍຄືວ່າ ທາງການສິງກະໂປ ມີຄວາມຕັ້ງໃຈເຮັດໃຫ້ 3 ຢ່າງໃນສິງກະໂປ ມີລາຄາແພງທີ່ສຸດ ນັ້ນກໍຄືລົດ, ເຫຼົ້າ ແລະ ຢາສູບ ດ້ວຍການຂຶ້ນພາສີ ເພາະເຫັນວ່າ 3 ສິ່ງນີ້ ເປັນສິ່ງຟຸມເຟືອຍ, ທຳລາຍສຸຂະພາບ ແລະ ທຳລາຍສິ່ງແວດລ້ອມ. ສຳລັບເບື້ອງລົດຫັ້ນ ເຂົາວ່າທາງການໄດ້ຕັ້ງພາສີສູງຮອດ 500% ສຳລັບລົດທີ່ຈະຊື້ມາໃຊ້ສ່ວນຕົວ; ເພື່ອທົດແທນການໃຊ້ລົດສ່ວນຕົວ, ທາງການສິງກະໂປ ໄດ້ພັດທະນາລະບົບການຂົນສົ່ງທີ່ສະດວກສະບາຍ, ທັນສະໄໝ, ທັນໃຈກວ່າການໃຊ້ລົດສ່ວນຕົວ ໃນຊົ່ວໂມງຮີບເຮັ່ງ, ທາງການກໍປະກາດຊົ່ວໂມງດັ່ງກ່າວ ໃຫ້ສາມາດເດີນທາງດ້ວຍພາຫະນະມວນຊົນໄດ້ຟຣີ ຫຼື ຫຼຸດລາຄາ.

ອີກຂ່າວໜຶ່ງທີ່ແປກຫູ ກໍຄືຂ່າວຫວ່າງບໍ່ດົນມານີ້ ກ່ຽວກັບທາງການຈະນຳໃຊ້ສີເຄືອບປະເພດເຢັນຕາ ທາຕຶກອາຄານທີ່ພັກທີ່ລັດລົງທຶນກໍ່ສ້າງ ເພື່ອຫຼຸດຜ່ອນອຸນຫະພູມ ຫຼື ໃຫ້ຄວາມຮ້ອນໃນບໍລິເວນຕຶກຫຼຸດລົງ. ເລື່ອງນີ້ໄດ້ທົດລອງແລ້ວ ແລະ ສາມາດເຮັດໃຫ້ອຸນຫະພູມຫຼຸດລົງໄດ້ 2 ອົງສາ, ເມື່ອອຸນຫະພູມຫຼຸດລົງ ການໃຊ້ໄຟຟ້າສຳລັບເຄື່ອງປັບອາກາດກໍຫຼຸດລົງ ເປັນການປະຢັດໄປໃນຕົວອີກດ້ວຍ, ສີເຄືອບເຢັນຕາຫຼຸດຄວາມຮ້ອນນີ້ ໄດ້ທົດລອງມາແລ້ວເປັນເວລາ 2 ປີ ກັບຕຶກທີ່ພັກພາອາໄສຈຳນວນ 130 ຫຼັງ; ໂຄງການນຳໃຊ້ສີເຄືອບເຢັນຕາທາຕຶກທີ່ພັກນີ້ ຈະໃຊ້ເວລາ 10 ປີ ຈຶ່ງຈະສຳເລັດ.




## ເສຍໃຈ

*#ບ່າວກະບື*

ໃນໄລຍະຊຸມເດືອນຕົ້ນໆຂອງຊີວິດແຕ່ງດອງໃໝ່, ຊາຍຜູ້ເປັນຜົວສາລະພາບວ່າ ເຂົາຮັກເມຍເຂົາແບບສຸດສະຫວາດຂາດໃຈ ຈົນຢາກກິນກິນບາງລົງທ້ອງ. ເມື່ອເວລາຜ່ານໄປຫຼາຍປີ, ເຂົາກໍນັບມື້ນັບເສຍໃຈທີ່ບໍ່ໄດ້ກິນກິນບາງສົມດັ່ງຄິດ.

## Regret

***#BAOKBU***

A husband was heard to compres that during the early months of hie marriage, he was so much in love with his wife that he wanted to eat her. As the years passed by, he increasingly regretted that he had mot!

## ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ສະຫາຍ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນສວາຍວັນທີ 1 ເມສາຜ່ານມາ, ສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ນາງ ຈີງ ມິງ ຮອງປະທານສະພາປະຊາຊົນນະຄອນຊຽງໄຮ້, ສປຈີນ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ; ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະໃນຄັ້ງນີ້ ນອກຈາກຈະສືບຕໍ່ຮັດແໜ້ນ ແລະເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ສະພາປະຊາຊົນນະຄອນຊຽງໄຮ້ ກໍຄືສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ປະກອບສ່ວນເພີ່ມທະວີສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ຍັງເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂໍ້ຕົກລົງການຮ່ວມມືລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນ ທີ່ໄດ້ລົງນາມໃນເດືອນກັນຍາ 2023 ໃຫ້ເຂົ້າສູ່ລວງເລິກ, ໃຫ້ນັບມື້ເປັນຮູບປະທຳ.

ສະຫາຍຮອງປະທານສະພາແຫ່ງຊາດລາວ ຍັງໄດ້ສະແດງຄວາມຊົມເຊີຍ ແລະຕີລາຄາສູງຕໍ່ຜົນສຳເລັດໃຫຍ່ຫຼວງຮອບດ້ານທີ່ປະຊາຊົນຈີນຍາດມາໄດ້ຕະຫຼອດໄລຍະຜ່ານມາແລະຜົນສຳເລັດຂອງກອງປະຊຸມສອງສະພາ ຄັ້ງທີ 3 ຊຸດທີ XIV ທີ່ປິດລົງຢ່າງຈົບງາມໃນວັນທີ 11 ມີນາ ຜ່ານມາເຊິ່ງໄດ້ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2024 ແລະທິດທາງແຜນການປີ2025 ແລະ ບັນຫາສຳຄັນອື່ນໆ ເວົ້າລວມ, ເວົ້າສະເພາະແມ່ນການພັດທະນາເສດຖະກິດ-ສັງຄົມຂອງນະຄອນຊຽງໄຮ້ ມີການພັດທະນາຢ່າງກ້າວກະໂດດ, ທັນສະໄໝ, ຮັ່ງມີເຂັ້ມແຂງ ແລະ ຈະເລີນຮຸ່ງເຮືອງ ເປັນຕົ້ນແບບນະຄອນທີ່ດີເລີດໃນໂລກ ທັງພາຍໃນປະເທດ, ເວທີພາກພື້ນ ແລະ ສາກົນ.

ສະຫາຍ ນາງ ຈີງ ມິງ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍຮອງປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ຈີນ-ລາວ, ແຈ້ງໃຫ້ຊາບຜົນສຳເລັດການພົບປະລະຫວ່າງນະຄອນຊຽງໄຮ້ ແລະ ນະຄອນຫຼວງວຽງຈັນທີ່ໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມື ພ້ອມທັງປຶກສາຫາລືການພົວພັນຮ່ວມມືລະຫວ່າງສອງນະຄອນໃນຕໍ່ໜ້າ; ນອກຈາກນັ້ນ, ຍັງແຈ້ງໃຫ້ຊາບສະພາບການທີ່ພົ້ນເດັ່ນຕ່າງໆຂອງສປຈີນ ໂດຍສະເພາະແມ່ນການພັດທະນາເສດຖະກິດ-ສັງຄົມຂອງນະຄອນຊຽງໄຮ້ພ້ອມທັງເຊື້ອເຊີນຄະນະຜູ້ແທນສະພາແຫ່ງຊາດລາວ ໄປຢ້ຽມຢາມ ແລະເຮັດວຽກຢູ່ນະຄອນຊຽງໄຮ້.

**(ສອນສັກ ວັນວິໄຊ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ